# ບົດລາຍງານ
# ຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດ
# ໂຄງການໄຟຟ້ານ້ຳຕົກ ນ້ຳເທີນ 2 ທີ່ ສ ປປ ລາວ

23 ຕຸລາ 2006

ຕົວອັກສອນຫຍໍ້

## ຕົວອັກສອນຫຍໍ້

| | |
|---|---|
| ADB | Asian Development Bank ທະນາຄານພັດທະນາອາຊີ |
| AfD | Agence Franηaise du Dωveloppement ອົງການຊ່ວຍເຫລືອເພື່ອການພັດທະນາສາກົນ ຂອງປະເທດຝຣັ່ງ |
| ASOSAI | Asian Organization of Supreme Audit Institutions ອົງການກວດສອບບັນຊີສູງສຸດ ຢູ່ທະວີບອາຊີ |
| BOL | Bank of Lao PDR ທະນາຄານແຫ່ງ ສປປ ລາວ |
| CA | Concession Agreement ສັນຍາສຳປະທານ |
| CPI | Committee on Planning and Investment ຄະນະກຳມະການແຜນການ ແລະການລົງທຶນ |
| DG | Development Grant ການຊ່ວຍເຫລືອເພື່ອການພັດທະນາ |
| DSRP | Dam Safety Review Panel ຄະນະກວດກາຄວາມປອດໄພຂອງເຂື່ອນ |
| EMU | Environmental Management Unit ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ |
| GDP | Gross Domestic Product ລວມຍອດຜະລິດຕະພັນພາຍໃນ |
| GLIP | Government Letter of Implementation Policy ຈົດໝາຍຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ |
| GOL | Government of Lao PDR ລັດຖະບານແຫ່ງ ສປປ ລາວ |
| GOLE | Government of Lao Engineer ນັກວິສະວະກອນຂອງລັດຖະບານແຫ່ງ ສປປ ລາວ |
| HCC | Head Construction Contract(or) ບໍລິສັດຫົວໜ້າຝ່າຍກໍ່ສ້າງ |
| IAG | International Advisory Group ທີມງານທີ່ປຶກສາ ສາກົນ |
| IDA | International Development Association ສະມາຄົມພັດທະນາສາກົນ |
| IFIs | International Financial Institutions participating in NT2 ສະຖາບັນການເງິນສາກົນ ທີ່ເຂົ້າຮ່ວມໂຄງການນ້ຳເທີນ 2 |
| IMA | Independent Monitoring Agency ອົງການກວດກາເອກະລາດ |

| | |
|---|---|
| IMF | International Monetary Fund ອົງການກອງທຶນສາກົນ |
| INTOSAI | International Association of Supreme Audit Institutions ສະມາຄົມຂອງອົງການກວດສອບບັນຊີສາກົນ |
| JBIC | Japan Bank of International Cooperation ທະນາຄານຍີ່ປຸ່ນເພື່ອການຮ່ວມມືສາກົນ |
| LE | Lenders' Engineer ວິສະວະກອນ ຂອງຜູ້ໃຫ້ທຶນ |
| MAF | Ministry of Agriculture and Forestry ກະຊວງກະສິກຳ ແລະ ປ່າໄມ້ |
| MDG | Millennium Development Goals ເປົ້າໝາຍການພັດທະນາແຫ່ງສະຫະວະວັດ |
| MDTF | MultiDonor Trust Fund ກອງທຶນຂອງຜູ້ໃຫ້ທຶນ |
| MOF | Ministry of Finance ກະຊວງການເງິນ |
| NGPES | National Growth and Poverty Eradication Strategy ຍຸດທະສາດການພັດທະນາ ແລະລົບລ້າງຄວາມທຸກຍາກແຫ່ງຊາດ |
| NSEDP | National Socioeconomic Development Plan ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ |
| NT2 | Nam Theun 2 Hydroelectric Project ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 |
| NTSEP | Nam Theun 2 Social and Environment Project ໂຄງການດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 |
| NTPC | Nam Theun 2 Power Company Limited ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 |
| PDR | (Lao) People's Democratic Republic ສາທາລະນະລັດປະຊາຊົນປະໄຕ ປະຊາຊົນລາວ |
| PEMSP | Public Expenditure Management Strengthening Program ແຜນງານປັບປຸງການຄຸ້ມຄອງລາຍຈ່າຍ ຂອງລັດ |
| PER | Public Expenditure Review ການກວດກາ ການໃຊ້ຈ່າຍຂອງລັດ |
| PETS | Public Expenditure Tracking Survey ການສຳຫລວດ ເພື່ອ |

| | |
|---|---|
| | ຕິດຕາມການໃຊ້ຈ່າຍຂອງລັດ |
| PIP | Project Implementation Plan ແຜນຈັດຕັ້ງປະຕິບັດໂຄງການ |
| POE | Environmental and Social Panel of Experts ທີມງານຜູ້ຊ່ຽວຊານ ດ້ານສິ່ງແວດລ້ອມ ແລະ ສັງຄົມ |
| PRSO | Poverty Reduction Support Operation ການດຳເນີນງານເພື່ອໃຫ້ການຊ່ວຍເຫລືອ ໃນການຫລຸດຜ່ອນຄວາມທຸກຍາກ |
| RMU | Resettlement Management Unit ໜ່ວຍງານຄຸ້ມຄອງ ການຍົກຍ້າຍຈັດສັນ |
| SAO | State Audit Organization ອົງການກວດສອບບັນຊີແຫ່ງລັດ |
| SOCBs | StateOwned Commercial Banks ທະນາຄານທຸລະກິດຂອງລັດ |
| SOE | StateOwned Enterprise ວິສາຫະກິດຂອງລັດ |
| WB | World Bank ທະນາຄານໂລກ |
| WCS | Wildlife Conservation Society ສະມາຄົມອະນຸລັກສັດປ່າຂອງໂລກ |
| WMPA | Watershed Management and Protection Authority ອົງການຄຸ້ມຄອງ ແລະ ປົກປັກຮັກສາອ່າງໂຕ່ງ |

**ບົດລາຍງານ**
**ຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດ**
**ໂຄງການໄຟຟ້ານ້ຳຕົກ ນ້ຳເທີນ 2 ທີ່ ສ ປປ ລາວ**

**ສາລະບານ**


I. ພາກສະເໜີ ແລະ ສັງລວມເນື້ອໃນ

II. ການພັດທະນາເສດຖະກິດ ໃນໄລຍະຜ່ານມາ

III. ການຈັດຕັ້ງປະຕິບັດໂຄງການ ໄຟຟ້ານ້ຳຕົກນ້ຳເທີນ 2

IV. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

V. ການລາຍງານ ແລະ ການຕິດຕາມກວດກາ

ເອກະສານຊ້ອນທ້າຍ 1 ການລາຍງານຄວາມຄືບໜ້າ ຂອງໂຄງການໄຟຟ້ານ້ຳຕົກເທີນຫີນບູນ ຈາກທະນາຄານພັດທະນາອາຊີ

## ບົດລາຍງານ
## ຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດ
## ໂຄງການໄຟຟ້ານ້ຳຕົກ ນ້ຳເທີນ 2 ທີ່ ສ ປປ ລາວ

## I. ພາກສະເໜີ ແລະ ສັງລວມເນື້ອໃນ

1. **ເອກະສານສະບັບນີ້ ແມ່ນບົດລາຍງານ ການຈັດຕັ້ງປະຕິບັດໂຄງການໄລຍະເຄິ່ງປີ.** ລະດັບບໍລິຫານຂອງທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ໄດ້ຕົກລົງລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ຢູ່ ສ ປປ ລາວ[1] ໂດຍມີການລາຍງານຮ່ວມກັນໃນແຕ່ລະປີ, ແລະ ຍັງມີການລາຍງານເພີ່ມເຕີມ ເຖິງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ໃນໄລຍະເຄິ່ງປີ. ບົດລາຍງານຄວາມຄືບໜ້າ ໃນການປະຕິບັດໂຄງການ ໄລຍະເຄິ່ງປີສະບັບນີ້ ແມ່ນສືບຕໍ່ລາຍງານຈາກ ບົດລາຍງານປະຈຳປີສະບັບວັນທີ 28 ມີນາ 2006. ບົດລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານປະຈຳປີຄັ້ງຕໍ່ໄປ ແມ່ນໄດ້ຖືກວາງແຜນ ໃຫ້ໄດ້ສົ່ງໃຫ້ແກ່ສະພາບໍລິຫານ ຂອງທະນາຄານທັງສອງ ໃນໄລຍະເດືອນ ມີນາ/ເມສາ 2007.

2. **ສ ປປ ລາວ ສາມາດຮັກສາເງື່ອນໄຂຄວາມໝັ້ນຄົງຂອງເສດຖະກິດມະຫາພາກ ແລະ ການພັດທະນາເສດຖະກິດ.** ຈົດໝາຍຕີລາຄາການພັດທະນາເສດຖະກິດ ຂອງອົງການກອງທຶນສາກົນ ສະບັບຜ່ານມາ (ກໍລະກົດ 2006) ໄດ້ຢັ້ງຢືນວ່າ ການຂະຫຍາຍຕົວຂອງເສດຖະກິດໄລຍະກາງ ແມ່ນຈະເປັນໄປໄດ້ດີ ຖ້າວ່ານະໂຍບາຍເສດຖະກິດມະຫາພາກ ໃນປັດຈຸບັນມີຄວາມໝັ້ນຄົງ, ຊຶ່ງເຫັນວ່າມີຄວາມເປັນໄປໄດ້ໃນເມື່ອລັດຖະບານ ສ ປປ ລາວ ໄດ້ໃຫ້ຄວາມສສຳຄັນຕໍ່ການປັບປຸງເສດຖະກິດ ແລະ ການຫລຸດຜ່ອນຄວາມທຸກຍາກ. ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະບັບສຸດທ້າຍ (2006 ຫາ 2011)[2] ຊຶ່ງຄາດວ່າຈະຖືກຮັບຮອງໃນມໍ່ໆນີ້. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊດ ຈະໃຫ້ທິດຊີ້ນຳ ກ່ຽວກັບການປັບປຸງທາງດ້ານເສດຖະທິດ ໃນໄລຍະ 5 ປີ ຕໍ່ໜ້າ ແລະ ແຜນດັ່ງກ່າວ ໄດ້ຜ່ານການປຶກສາຫາລືຢູ່ພາຍໃນປະເທດ ແລະ ອົງການຜູ້ໃຫ້ທຶນ. ການສະໜັບສະໜູນວຽກງານກ່ຽວກັບ ການຫລຸດຜ່ອນຄວາມທຸກຍາກແມ່ນຍັງສືບຕໍ່ດຳເນີນ. ການໃຫ້ການຊ່ວຍເຫລືອ ເພື່ອຫລຸດຜ່ອນຄວາມທຸກຍາກໄລຍະທີ 2 ໄດ້ຖືກຮັບຮອງ

---

[1] ການສະໜອງທຶນໃຫ້ແກ່ໂຄງການດັ່ງກ່າວນີ້ –ໄດູຖືກຮັບຮອງເອົາໂດຍ ສະພາບໍລິຫານຂອງທະນາຄານໂລກ ໃນວັນທີ 31 ມີນາ 2005 –ແລະ ສະພາບໍລິຫານຂອງທະນາຄານພັດທະນາອາຊີ –ໃນວັນທີ 04 –ເມສາ 2005

[2] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 6 –ເປັນແຜນງານເພື່ອຜັນຂະຫຍາຍຍຸດທະສາດການພັດທະນາ ແລະ ລົບລ້າງຄວາມທຸກຍາກແຫ່ງຊາດ ຊຶ່ງເປັນຍຸດທະສາດຂອງປະເທດສະບັບທຳອິດ ກ່ຽວກັບການລົບລ້າງຄວາມທຸກຍາກ ແລະ ເປັນເອກະສານທີ່ໄດ້ໃຊ້ຂະບວນການ –ໃນການສ້າງເປັນໄລຍະຍາວ (ເລີ່ມຕົ້ນຕັ້ງແຕ່ເດືອນ –ເມສາ 2001) –ແລະ ເປັນເອກະສານສະບັບທຳອິດ ທີ່ໄດ້ນຳໃຊ້ຂະບວນການແບບມີສ່ວນຮ່ວມ

ໂດຍ ສະພາບໍລິຫານຂອງທະນາຄານໂລກ ໃນເດືອນ ເມສາ 2006 ແລະ ໄລຍະທີ 3 ແມ່ນຈະໄດ້ສະເໜີຕໍ່ ສະພາບໍລິຫານ ເພື່ອພິຈາລະນາຮັບຮອງ ໃນໄຕມາດທີ 2 ຂອງປີ 2007. ປະເທດຍີ່ປຸ່ນ ແລະ ປະຊາເອີລົບ ໄດ້ເຂົ້າຮ່ວມໃນທີມງານ ແລະ ກໍາລັງພິຈາລະນາ ເພື່ອຮ່ວມສະໜອງທຶນ ໃຫ້ແກ່ການດໍາເນີນວຽກງານ ດັ່ງກ່າວນີ້. ສ່ວນໃຫຍ່ແລ້ວເຫັນວ່າ ການປັບປຸງທາງດ້ານການຈັດຕັ້ງ ແມ່ນດໍາເນີນໄປຢ່າງເປັນໜ້າເພິ່ງພໍໃຈ. ການປັບປຸງການຄຸ້ມຄອງ ການໃຊ້ຈ່າຍງົບປະມານ ແມ່ນໄດ້ຖືກເອົາໃຈໃສ່ໃນໄລຍະ 6 ເດືອນ ຜ່ານມາ, ລວມທັງມີການປຶກສາຫາລືກັນພາຍໃນລັດຖະບານ ກ່ຽວກັບການສາຍພົວພັນທາງດ້ານງົບປະມານ ລະຫວ່າງສູງກາງ ແລະ ທ້ອງຖິ່ນ ແລະ ການຄຸ້ມຄອງຄັງເງິນແບບລວມສູນ, ແລະ ການພັດທະນາລະບົບ ລາຍໄດ້ ແລະ ລາຍຈ່າຍງົບປະມານໄລຍະກາງ. ການຈັດຕັ້ງປະຕິບັດແຜນງານ ປັບປຸງການຄຸ້ມຄອງການ ໃຊ້ຈ່າຍງົບປະມານ ແມ່ນມີຄວາມຄືບໜ້າດີ ເຖິງວ່າຈະມີຄວາມລ່າຊ້າໃນໄລຍະເລີ່ມຕົ້ນ. ຄວາມຄືບໜ້າ ກ່ຽວກັບການປັບປຸງທະນາຄານທຸລະກິດຂອງລັດ ແມ່ນເປັນບັນຫາທີ່ໜ້າເປັນຫ່ວງ, ແຕ່ວ່າບັນຫາດັ່ງກ່າວນີ້ ແມ່ນໄດ້ຮັບຄວາມເອົາໃຈໃສ່ ພາຍໃຕ້ໂຄງການໃຫ້ການຊ່ວຍເຫລືອ ເພື່ອຫລຸດຜ່ອນຄວາມທຸກຍາກ ໄລຍະ ທີ 3 ຂອງທະນາຄານ—ໂລກ ແລະ ໂຄງການປັບປຸງຂະແໜງທະນາຄານ ຂອງທະນາຄານພັດທະນາອາຊີ. ກະຊວງ ການເງິນ ແລະ ທະນາຄານແຫ່ງ ສ ປປ ລາວ ໄດ້ມີການປັບປຸງສັນຍາກ່ຽວກັບການບໍລິຫານຈັດການ ກັບທະນາຄານທຸລະກິດຂອງລັດ ເພື່ອຈັດຕັ້ງປະຕິບັດວຽກງານ ກ່ຽວກັບການປັບປຸງໂຄງສ້າງດ້ານ ການຈັດຕັ້ງ ແລະ ການບໍລິຫານຈັດການ.

**3. ການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງໂຄງການນໍ້າເທີນ 2 ແມ່ນເປັນໄປຕາມແຜນການ ແລະ ການກໍ່ສ້າງໃນປັດຈຸບັນ ແມ່ນເປັນໄປໄດ້ດີກວ່າເກົ່າ ກັບການຈັດຕັ້ງປະຕິບັດມາດຕະການ ຫລຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.** ລະດູຝົນທີ່ຜ່ານມາ ບໍ່ທັນໄດ້ສ້າງຜົນກະທົບທີ່ຮ້າຍແຮງ ຕໍ່ ຄວາມຄືບໜ້າຂອງການກໍ່ສ້າງ, ຊຶ່ງສ່ວນໃຫຍ່ແມ່ນດໍາເນີນໄປຕາມແຜນການ.—ໃນປັດຈຸບັນວຽກງານເຈາະ ອຸໂມງ ຫລື ພື້ນດິນ ໄດ້ຖືກສໍາເລັດ, ຄວາມຢ້ານກົວກ່ຽວກັບ ການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍ ທີ່ບໍ່ໄດ້ຄາດຄະເນໄວ້ນັ້ນ ຖືກຫລຸດຜ່ອນລົງ. ການເກັບນໍ້າຢູ່ໃນອ່າງ ແລະ ການດໍາເນີນການຜະລິດ ເພື່ອການຄ້າ ແມ່ນຈະ ໄດ້ດໍາເນີນຕາມກໍານົດເວລາ ຄືໃນເດືອນ ພຶດສະພາ 2008 ແລະ ທັນວາ 2009 ຕາມລໍາດັບ. ການຍົກຍ້າຍ ຈັດສັນຢູ່ເມືອງ ນາກາຍ ແມ່ນເລີ່ມເປັນໄປໄດ້ດີ. ການຈັດຕັ້ງປະຕິບັດແຜນງານ ເພື່ອຍົກຍ້າຍປະຊາຊົນໄດ້ ໄວຂຶ້ນ ແລະ ການເອົາໃຈໃສ່ເພີ່ມເຕີມ ຕໍ່ຜົນກະທົບທາງດ້ານສິ່ງແວດລ້ອມ ຢູ່ພູພຽງນາກາຍ ແລະ ມາດ ຕະການຫລຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ແມ່ນໄປຄຽງຄູ່ກັບວຽກງານການກໍ່ສ້າງໄດ້ດີຂຶ້ນ. ໂຄງການເພື່ອແກ້ໄຂບັນຫາ ເຂດກ້ອງເຂື່ອນ ແລະ ໂຄງການປົກປັກຮັກສາສັດປ່າ ແມ່ນຍັງຢູ່ໃນຂັ້ນຕອນ ຂອງການກະກຽມ ແລະ ການຈັດຕັ້ງປະຕິບັດຕາມລໍາດັບ ແລະ ມີຄວາມຈໍາເປັນຕ້ອງມີການຄຸ້ມຄອງທີ່ດີ ເພື່ອຮັບປະກັນຄຸນນະພາບ ແລະ ການຈັດຕັ້ງປະຕິບັດວຽກງານໃຫ້ທັນກັບເວລາ.

**4. ການພັດທະນາໂຄງການ ເພື່ອປັບປຸງການດຳລົງຊີວິດ ແມ່ນມີຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ແລະ ການຊົດເຊີຍຄ່າເສຍຫາຍ, ແຕ່ວຽກງານທັງສອງດ້ານນີ້ ຈຳເປັນຕ້ອງໄດ້ມີການຕິດຕາມກວດກາ ຢ່າງໃກ້ສິດ.** ລະດັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ໃນເຂດຍົກຍ້າຍຈັດສັນນາກາຍ, ລວມທັງການທົດເຊີຍຄ່າເສຍຫາຍ ແມ່ນມີຄວາມຄືບໜ້າ ແລະ ທັນກັບໂຄງການເລັ່ງການຍົກຍ້າຍຈັດສັນ. ສຳລັບທີ່ດິນຂອງໂຄງການ,[3] ການຊົດເຊີຍຄ່າເສຍຫາຍ ໄດ້ສຳເລັດ ສຳລັບຄວາມຄົວທີ່ໄດ້ຮັບຜົນກະທົບໜ້ອຍ ແລະ ການຊົດເຊີຍຄັ້ງສຸດທ້າຍ ແມ່ນກຳລັງດຳເນີນຢູ່. ສຳລັບຄອບຄົວທີ່ໄດ້ຮັບຜົນກະທົບທີ່ຮ້າງແຮງ ແມ່ນໄດ້ມີການຊົດເຊີຍ ສຳລັບການສູນເສຍຜົນລະປູກໃນລະດູແລ້ງ ແລະ ຈະສືບຕໍ່ຈ່າຍຄ່າຊົດເຊີຍ ຈົນກວ່າສຳເລັດການຈັດຕັ້ງປະຕິບັດໂຄງການ ປັບປຸງຊີວິດການເປັນຢູ່. ພ້ອມດຽວກັນນັ້ນ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ກຳລັງສ້າງແຜນງານຍົກຍ້າຍຈັດສັນ ໃຫ້ສຳເລັດ ໂດຍມີການສັງລວມເອົາຄວາມເຫັນຈາກສະຖາບັນການເງິນສາກົນ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການ ປັບປຸງຊີວິດການເປັນຢູ່. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຮັບການຮ້ອງຮຽນຈຳນວນໜຶ່ງ ກ່ຽວກັບບັນຫາການຊົດເຊີຍຄ່າເສຍຫາຍຢູ່ບາງໝູ່ບ້ານ ຢູ່ເຂດຍົມມະລາດ. ເພື່ອແກ້ໄຂບັນຫາດັ່ງກ່າວ, ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ລັດຖະບານແຫ່ງ ສ ປປ ລາວ ກຳລັງກວດກາການຈ່າຍຄ່າຊົດເຊີຍຄືນ ຢູ່ທຸກໝູ່ບ້ານ ເພື່ອຊອກຫາຄວາມເສຍຫາຍ ທີ່ອາດເປັນໄປໄດ້. ຈາກການກວດກາວຽກງານເຫັນວ່າ ການຮ້ອງຮຽນສ່ວນໃຫຍ່ ແມ່ນເກີດຈາກຄວາມບໍ່ເຂົ້າໃຈ ກ່ຽວກັບນະໂຍບາຍ ກ່ຽວກັບສິດໃນການຮັບຄ່າຊົດເຊີຍ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ທີມງານຂອງເມືອງ ກຳລັງປັບປຸງການສື່ສານຂອງຕົນ ກັບຊຸມຊົນທ້ອງຖິ່ນ.

**5. ການຍົກລະດັບຄວາມສາມາດ ຍັງເປັນບັນຫາໃຈກາງ ທີ່ຕ້ອງໄດ້ເອົາໃຈໃສ່.** ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ວ່າຈ້າງຜູ້ຊ່ຽວຊານ ເພື່ອຊ່ວຍຍົກລະດັບໜ່ວຍງານສິ່ງແວດລ້ອມ ແລະ ສັງຄົມຂອງຕົນ ແລະ ມີການປັບປຸງການຄຸ້ມຄອງການກໍ່ສ້າງ ຊຶ່ງມີຜົນກະທົບຕໍ່ສິ່ງແວດລ້ອມ. ບໍລິສັດຍັງໄດ້ ດຳເນີນມາດຕະການເພື່ອປັບປຸງການປະສານງານກັບ ບໍລິສັດທີ່ເປັນຫົວໜ້າຜູ້ຮັບເໝົາກໍ່ສ້າງ ພ້ອມທັງການປະສານງານກັບລັດຖະບານແຫ່ງ ສ ປປ ລາວ ແລະ ໜ່ວຍງານສິ່ງແວດລ້ອມ ເພື່ອປັບປຸງການກວດກາ ບໍລິສັດທີ່ເປັນຫົວໜ້າການກໍ່ສ້າງ.ນີ້ໝາຍຄວາມວ່າ ມີຄວາມຈຳເປັນຕ້ອງໄດ້ປັບປຸງວຽກງານ ຢູ່ໃນຂົງເຂດວຽກງານທີ່ສຳຄັນດັ່ງກ່າວນີ້ ເພື່ອສາມາດບັນລຸຜົນສຳເລັດ ໃນການຈັດຕັ້ງປະຕິບັດວຽກງານ. ອົງການຄຸ້ມຄອງ ແລະ ປົກປັກຮັກສາອ່າງໂຕ່ງ ສາມາດປະຕິບັດວຽກງານຂອງຕົນໄດ້ດີ.ອົງການດັ່ງກ່າວ ໄດ້ສຳເລັດການວາງແຜນນຳໃຊ້ທີ່ດິນ ແລະ ປັບປຸງຊີວິດການເປັນຢູ່ ໃນໄລຍະທຳອິດ ຢູ່ 9 ໝູ່ບ້ານ. ອົງການດັ່ງກ່າວ ໄດ້ໃຫ້ການ

[3] ທີ່ດິນຂອງໂຄງການລວມເອົາ ທີ່ດິນທີ່ຈຳເປັນສຳລັບການກໍ່ສ້າງ: ສະຖານີໄຟຟ້າ, ອ່າງເກັບນ້ຳນາກາຍ, ອ່າງຮັບນ້ຳ, ອ່າງປັບນ້ຳນາກາຍ, ຄອງນ້ຳຫລັງຈາກເຂື່ອນ, ຄອງນ້ຳເຂົ້າທໍ່ລົ່ງນ້ຳ, ລະບົບໂຄງສ້າງ ເພື່ອຮັບນ້ຳເຂົ້າທໍ່ລົ່ງນ້ຳໄປເຮືອນຈັກ,ເຂດທີ່ຢູ່ອາໄສນ້ຳເທີນ, ເຂດເອົາຫີນເອົາຊາຍ, ເຂດເຮືອນພັກກຳມະກອນກໍ່ສ້າງ, ພ້ອມທັງເຂດເຊື່ອມຕໍ່ສຳລັບລະບົບສາຍສົ່ງ 500kv –ແລະ 115 kv –ແລະ ທົນທາງທີ່ຕ້ອງໄດ້ກໍ່ສ້າງ ຫລື ປັບປຸງໃຫ້ດີຂຶ້ນ

ຊ່ວຍເຫລືອໃນຂັ້ນພື້ນຖານ ໃນການບໍລິການທາງດ້ານສາທາລະນາສຸກ ແລະ ການສຶກສາ ຢູ່ເຂດອ່າງໂຕ່ງ ແລະ ໄດ້ມີການປັບປຸງລະບົບ ແລະ ວຽກງານກ່ຽວກັບການບັງຄັບປະຕິບັດລະບຽບການຂອງຕົນ. ໃນເວລາທີ່ ລັດຖະບານແຫ່ງ ສ ປປ ລາວ ໄດ້ໃຊ້ຄວາມພະຍາຍາມຫລາຍດ້ານ ເພື່ອຍົກລະດັບຄວາມສາມາດ ຂອງ ພາກສ່ວນທີ່ກ່ຽວຂ້ອງ ແຕ່ເຫັນວ່າຍັງຂາດອົງການທີ່ເປັນເຈົ້າການ ສາມາດດຳເນີນວຽກງານໄດ້ຢ່າງມີ ປະສິດທິຜົນ ໃນການຈັດຕັ້ງປະຕິບັດວຽກງານ ເພື່ອປະສານງານກັບບັນດາອົງການທີ່ມີສ່ວນກ່ຽວຂ້ອງ ກັບ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ເພື່ອຮັບປະກັນໃຫ້ລັດຖະບານ ສາມາດປະຕິບັດພັນທະຂອງຕົນ ຕາມໂຄງການໄຟຟ້ານ້ຳຕົກນ້ຳເທີນ 2. ການຂາດອົງການດັ່ງກ່າວນີ້ ເຮັດໃຫ້ການລະດົມທຶນພະຍາກອນມີ ຄວາມຊັກຊ້າ ແລະ ພາໃຫ້ການດຳເນີນວຽກງານບໍ່ມີປະສິດທິຜົນ. ທະນາຄານໂລກ ແລະ ທະນາຄານ ພັດທະນາອາຊີ ກຳລັງປຶກສາຫາລືກັບ ລັດຖະບານແຫ່ງ ສ ປປ ລາວ ກ່ຽວກັບບັນຫານີ້. ກ່ຽວກັບການຄຸ້ມ ຄອງການເງິນຂອງລັດ, ລັດຖະບານແຫ່ ງ ສ ປປ ລາວ ກຳລັງຄົ້ນຄວ້າເພື່ອສ້າງຕັ້ງກອງທຶນ ເພື່ອຮັບເອົາ ການຊ່ວຍເຫລືອຈາກຜູ້ໃຫ້ທຶນຕ່າງໆ ເພື່ອຊຸກຍູ້ການປັບປຸງວຽກງານຢູ່ໃນຂົງເຂດນີ້ ແລະ ໄດ້ມີການລິເລີ່ມ ໃນການປຶກສາຫາລື ລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ ກ່ຽວກັບວິທີການໃນການສ້າງຕັ້ງກອງທຶນດັ່ງກ່າວ. ໃນເວລາດຽວກັນ ກະຊວງ ການເງິນ ກຳລັງສ້າງຍຸດທະສາດ ກ່ຽວກັບການພັດທະນາຄວາມສາມາດແບບ ຮອບດ້ານ, ຊຶ່ງຄາດວ່າຈຳສຳເລັດໃນປີ 2007. ການໃຫ້ການຊ່ວຍເຫລືອ ຂອງທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ໃນການພັດທະນາລະບົບການໃນໄລຍະກາງ ແລະ ລະບົບການໃຊ້ຈ່າຍ ງົບປະມານໃນໄລຍະກາງ ແມ່ນກຳລັງດຳເນີນຢູ່.

6. **ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແມ່ນໄດ້ຮັບການຊຸກຍູ້ສິ່ງເສີມ.** ການປຶກສາຫາລືແບບ ສ້າງສັນ ກັບຊຸມຊົນທ້ອງຖິ່ນ ແມ່ນດຳເນີນໄປໄດ້ດີ ຢູ່ທຸກຂົງເຂດຂອງໂຄງການ ພາຍໃຕ້ການວາງແຜນ ແລະ ການຈັດຕັ້ງປະຕິບັດວຽງການດ້ານຕ່າງໆ. ໂຄງການຍັງດຶງດູດຄວາມສົນໃຈຈາກສາກົນ ແລະ ມີການຖົກຖຽງ ບັນຫາໃນຫລາຍດ້ານ. ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ໄດ້ລາຍງານຫຍໍ້ໃຫ້ແກ່ຜູ້ໃຫ້ທຶນ ຢູ່ໃນນະຄອນຫລວງວຽງຈັນ ກ່ຽວກັບຄວາມຄືບຫນ້າຂອງໂຄງການ.ການຈັດກອງປະຊຸມໂຕະມົນ ໄດ້ໃຫ້ ໂອກາດແບບເປັນທາງການ ແກ່ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ເພື່ອລາງານຫຍໍ້ໃຫ້ແກ່ຜູ້ ເຂົ້າຮ່ວມ ຮັບຮູ້ເຖິງຄວາມຄືບຫນ້າຂອງໂຄງການນ້ຳເທີນ 2, ເຫັນໄດ້ຄວາມຕັດສິນໃຈສູງຂອງລັດຖະບານ; ກອງປະຊຸມໂຕະມົນຄັ້ງຕໍ່ໄປ (ວາງແຜນວ່າຈະຈັດໃນວັນທີ 28 ທາ ພະຈິກ 2006) ຊຶ່ງຈະເວົ້າເຖິງເລື່ອງ ການປົກຄອງບໍລິຫານ ແລະ ການພັດທະນາພາກເອກະຊົນ. ກອງປະຊຸມປະຈຳປີ ຂອງໂຄງການນ້ຳເທີນ 2 ກັບພາກສ່ວນທີ່ກ່ຽວຂ້ອງ ຖືກຈັດຕັ້ງປະຕິບັດສຳເລັດ ໃນວັນທີ 17 ພຶດສະພາ 2006 (ຊຶ່ງມີການລົງ ຢ້ຽມຢາມໂຄງການ ໃນວັນທີ 18 ພຶດສະພາ). ກອງປະຊຸມດັ່ງກ່າວ ໄດ້ໃຫ້ໂອກາດທີ່ດີ ແກ່ພາກສ່ວນທີ່ ກ່ຽວຂ້ອງ ໃນການປຶກສາຫາລື ກ່ຽວກັບບັນຫາ ການຍົກຍ້າຍຈັດສັນ, ບັນຫາສິ່ງແວດລ້ອມ, ບັນຫາກ່ຽວກັບ ອ່າງໂຕ່ງ, ການຕັດໄມ້ອອກຈາກອ່າງໂຕ່ງ ການຄຸ້ມຄອງລາຍໄດ້, ຊີວະນາໆພັນ, ສັດປ່າ, ຄຸນນະພາບນ້ຳ

ແລະ ອື່ນໆ. ລັດຖະບານແຫ່ງ ສ ປປ ລາວ ແລະ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຕອບບັນຫາຢ່າງມີລັກສະນະສ້າງສັນ ຕໍ່ຄຳເປັນ ແລະ ຂໍ້ສະເໜີແນະນຳຕ່າງໆ ທີ່ຍົກຂຶ້ນໃນເວລາປະຊຸມ.

7. **ການຈັດການ ກ່ຽວກັບການລາຍງານ ແລະ ການຕິດຕາມກວດກາ ໄດ້ຮັບການປັບປຸງ ເພື່ອຕອບສະໜອງ ຄວາມຕ້ອງການ ແລະ ບົດຮຽນທີ່ໄດ້ຮັບ ຈາກການຈັດຕັ້ງປະຕິບັດໂຄງການ ໃນໄລຍະ 1 ປີ ຜ່ານມາ.** ການເປີດເຜີຍຂໍ້ມູນ ແມ່ນດຳເນີນໄປຢ່າງມີປະສິດທິຜົນ ດ້ວຍການໂຄສະນາເຜີຍແຜ່ຂໍ້ມູນ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ. ຍັງມີການສະໜອງຂໍ້ມູນເພີ່ມເຕີມ ໂດຍຜ່ານການຕອບຄຳຖາມໃນແຕ່ລະໄລຍະຈາກອົງການຈັດຕັ້ງສັງຄົມ ກ່ຽວກັບລາຍລະອຽດຂອງການຈັດຕັ້ງປະຕິບັດວຽກງານ.ວຽກງານຕິດຕາມກວດກາ ແມ່ນດຳເນີນໄປໄດ້ດີ. ທີມງານທີ່ປຶສາ ສາກົນໄດ້ຮັບປັບປຸງ ໂດຍມີສະມາຊິກເພີ່ມໃຫມ່ອີກ 3 ຄົນ ແລະ ທີມງານດັ່ງກ່າວ ຈະມາກວດກາໂຄງການ ໃນເດືອນ ກຸມພາ 2007. ທີມງານຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ໄດ້ມາກວດກາໂຄງການ ໃນເດືອນ ສິງຫາ 2006 ໂດຍສືບຕໍ່ການມາກວດກາຄັ້ງກ່ອນໃນເດືອນ ມັງກອນ/ກຸມພາ 2006; ການກວດກາຄັ້ງໜ້າແມ່ນວາງແຜນໄວ້ສຳລັບ ເດືອນ ມັງກອນ 2007. ຂໍ້ສະເໜີແນະນຳຂອງທີມງານທີ່ປຶກສາ ແລະ ທີມງານຜູ້ຊ່ຽວຊານ ແມ່ນຖືກຍອມຮັບໂດຍລັດຖະບານແຫ່ງ ສ ປປ ລາວ/ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ສະຖາບັນການເງິນສາກົນ. ໄດ້ມີຄວາມຊັກຊ້າໃນການວ່າຈ້າງ ສອງໃນສາມອົງການກວດກາເອກະລາດ ໃຫ້ແກ່ລັດຖະບານ (ອົງການກວດກາເອກະລາດ ກ່ຽວກັບການຍົກຍ້າຍຈັດສັນ ແລະ ອົງການກວດກາເອກະລາດ ກ່ຽວກັບສິ່ງແວດລ້ອມ) ຕາມທີ່ລະບຸໄວ້ຢູ່ໃນສັນຍາສຳປະທານ. ທະນາຄານໂລກໄດ້ ຍົກບັນຫານີ້ຂຶ້ນຕໍ່ລັດຖະບານແຫ່ງ ສ ປປ ລາວ/ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຊຶ່ງບັນຫາດັ່ງກ່າວ ໄດ້ຮັບການສະໜັບສະໜູນຢ່າງເຕັມສ່ວນ ຈາກທະນາຄານພັດທະນາອາຊີ, ເພື່ອໃຫ້ລັດຖະບານ ແລະ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ເອົາໃຈໃສ່ຕໍ່ບັນຫານີ້. ລັດຖະບານແຫ່ງ ສ ປປ ລາວ ໄດ້ເລີ່ມຄັດເລືອກຂັ້ນຕອນ ໂດຍການນຳໃຊ້ບົດນຳຂອງທະນາຄານໂລກ ເພື່ອຄັດເລືອກຜູ້ຊ່ຽວຊານ ທີ່ຈະໄດ້ຮັບການວ່າຈ້າງຕາມສັນຍາ ໃນເດືອນ ທັນວາ 2006 ແລະ ເດືອນ ກຸມພາ 2007 ເພື່ອໃຫ້ເປັນອົງການກວດກາເອກະລາດ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຕາມລຳດັບ. ປະສິດທິຜົນຂອງການກວດກາໂຄງການ ຂອງທະນາຄານໂລກ ແມ່ນໄດ້ຮັບການປັບປຸງ ໂດຍອີງໃສ່ປະສົບການ ໃການຈັດຕັ້ງປະຕິບັດໂຄງການ ໃນໄລຍະ 1 ປີ ຜ່ານມາ ແລະ ຄຳປຶກສາຈາກທີມງານທີ່ປຶກສາ, ຄວາມພະຍາຍາມຂອງທະນາຄານທັງສອງ ແມ່ນມີຄວາມຕິດພັນກັນ. ການຮ່ວມມືຂອງບັນດາສະຖາບັນການເງິນສາກົນ ກ່ຽວກັບການຕິດຕາມກວດກາວຽກງານຮ່ວມກັນ ໄດ້ຖືກທົດລອງຈັດຕັ້ງປະຕິບັດ ເພື່ອເປັນຕົວຢ່າງ.

8. **ນອກຈາກການວ່າຈ້າງ ອົງການຕິດຕາມກວດກາວຽກງານ ທີ່ມີຄວາມເປັນເອກະລາດ ຍັງມີສອງຂົງເຂດວຽກງານ ທີ່ຕ້ອງໄດ້ຮັບຄວາມເອົາໃຈໃສ່ຢ່າງຮີບດ່ວນ ຄື ການຕັດໄມ້ອອກຈາກອ່າງເກັບນ້ຳ ແລະ ສານຊີວະພາບ (biomass).** ໄດ້ມີການປັບປຸງແຜນງານຂັ້ນສຸດທ້າຍ ເພື່ອຕັດໄມ້ອອກຈາກເຂດອ່າງເກັບນ້ຳ ໃຫ້

ໄດ້ພາຍໃນສອງລະດູແລ້ງໃນຕໍ່ໜ້າ ໃນເມື່ອຈະມີການຈັດນໍ້າ ເພື່ອໃຫ້ນໍ້າເຕັມອ່າງໃນເດືອນ ພຶດສະພາ 2008. ວຽກງານນີ້ຮຽກຮ້ອງໃຫ້ມີການຕິດຕາມກວດກາຢ່າງໃກ້ສິດ ໂດຍລັດຖະບານແຫ່ງ ສ ປປ ລາວ ເພື່ອໃຫ້ໂຄງການສໍາເລັດຕາມກໍານົດເວລາ ແລະ ຫລີກເວັ້ນຜົນກະທົບທາງລົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ເຖິງວ່າຈະມີການປະເມີນຜົນທາງດ້ານເຕັກນິກ ຢູ່ໃນໄລຍະກະກຽມໂຄງການ, ການກວດກາຢ່າງເປັນລະບົບກ່ຽວກັບວິທີເລືອກໃນການອະນາໄມອ່າງເກັບນໍ້າ ໂດຍສະເພາະຜົນກະທົບຂອງສານຊີວະພາບ ຕໍ່ຄຸນນະພາບຂອງນໍ້າ ໃນອ່າງເກັບນໍ້າ ແມ່ນຍັງບໍ່ທັນຖືກຈັດຕັ້ງປະຕິບັດສໍາເລັດ. ໃນເມື່ອວຽກດັ່ງກ່າວນີ້ ຈະບໍ່ໄດ້ຢຸດຕິການຕັດໄມ້ຢູ່ອ່າງເກັບນໍ້າ, ແຕ່ມັນມີຄວາມສໍາຄັນທີ່ຕ້ອງໄດ້ຈັດຕັ້ງປະຕິບັດວຽກງານນີ້ ໃຫ້ສໍາເລັດໂດຍໄວ ກ່ອນທີ່ຈະເລີ່ມດໍາເນີນການອະນາໄມອ່າງໂຕ່ງ ເພື່ອຄຸ້ມຄອງຜົນກະທົບທາງດ້ານສິ່ງແວດລ້ອມ. ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ໄດ້ປຶກສາຫາລືກັບລັດຖະບານແຫ່ງ ສ ປປ ລາວ ແລະ ບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ກ່ຽວກັບບັນຫາດັ່ງກ່າວນີ້.

## II. ການພັດທະນາເສດຖະກິດ ໃນໄລຍະຜ່ານມາ

9. **ສປປ ລາວ ສາມາດຮັກສາເງື່ອນໄຂ ດ້ານເສດຖະກິດມະຫາພາກ ຄ່ອນຂ້າງໝັ້ນຄົງ ແລະສາມາດສົ່ງເສີມການພັດທະນາເສດຖະກດິ.** ລະບຽບການກ່ຽວກັບການເງິນ ແລະການຄຸ້ມຄອງງົບປະມານ ໄດ້ຮັບການປັບປຸງ[4] ແລະມີການປັບປຸງທາງດ້ານການຈັດຕັ້ງ ກ່ຽວກັບການຄ້າ, ການພັດທະນາພາກເອກະຊົນ ແລະການຄຸ້ມຄອງການເມືອງຂອງລັດ. ມີການພັດທະນາເສດຖະກິດ ທີ່ເຂັ້ມແຂງພໍສົມຄວນ ແລະມີອັດຕາເງິນເຟີ້ຄ່ອນຂ້າງຕໍ່າ ເປັນການຊຸກຍູ້ການຫລຸດຜ່ອນຄວາມທຸກຍາກ ຢູ່ໃນເຂດຊົນນະບົດ ແລະຕົວເມືອງ ແລະປັບປຸງຜົນໄດ້ຮັບທາງດ້ານສັງຄົມ.

10. **ການຂະຫຍາຍຕົວທາງດ້ານເສດຖະກິດ ຄາດຄະເນວ່າຈະໄດ້ 7.5% ຢູ່ໃນປີ 2006 ແລະສາຍພົວພັນກັບພາຍນອກ ຂອງ ສປປ ລາວ ໄດ້ຮັບການປັບປຸງຂຶ້ນ.** ຫລັງຈາກການຂະຫຍາຍຕົວ ທາງດ້ານເສດຖະກິດ ບັນລຸ 7% ໃນປີ 2005, ຊຶ່ງສ່ວນໃຫຍ່ແລ້ວ ແມ່ນຍ້ອນການລົງທຶນ ຢູ່ໃນຂະແໜງຂຸດຄົ້ນບໍ່ແຮ່ ແລະໄຟຟ້ານໍ້າຕົກ, ຄາດຄະເນວ່າເສດຖະກິດ ຈະມີການຂະຫຍາຍຕົວ ໃນລະດັບ 7.5% ຢູ່ໃນປີ 2006 ແລະຈະສືບຕໍ່ຂະຫຍາຍຕົວໃນປີ 2007 ໃນລະດັບດຽວກັນ ຍ້ອນການຂະຫຍາຍການລົງທຶນ ແລະການສົ່ງອອກ. ການລົງທຶນຂອງຕ່າງປະເທດ ໄດ້ຫລັ່ງໄຫລເຂົ້າມາ ໃນຂະແໜງຂຸດຄົ້ນບໍ່ແຮ່ ແລະໄຟຟ້ານໍ້າຕົກ. ການທ່ອງທ່ຽວໄດ້ຮັບການປັບປຸງດີຂຶ້ນ ແລະການສົ່ງອອກທີ່ບໍ່ເຄີຍມີມາກ່ອນ ໄດ້ຮັບການຂະຫຍາຍຕົວ. ການສົ່ງອອກຄໍາ ແລະທອງແດງ ໄດ້ເພີ້ມຂຶ້ນຢ່າງໄວວາ ໃນໄລຍະ 2 ປີຜ່ານມາ. ແຕ່ການສົ່ງອອກເຄື່ອງນຸ່ງ

---

[4] ຫລັງຈາກການສິ້ນສຸດໂຄງການຫລຸດຜ່ອນຄວາມທຸກຍາກ ແລະສົ່ງເສີມການພັດທະນາ ໃນເດືອນເມສາ 2005 ອົງການກອງທຶນສາກົນ ໄດ້ມີການຕິດຕາມກວດກາວຽກງານ ໂດຍສົ່ງທີມງານມາດໍາເນີນວຽກງານ ສອງຄັ້ງຕໍ່ປີ, ຜົນຂອງວຽກງານດ້ານໜຶ່ງ ແມ່ນໄດ້ລະບຸໄວ້ຢູ່ໃນ ມາດຕາ IV ຂອງບົດລາຍງານການປຶກສາຫາລື ແລະຍັງລະບຸຢູ່ໃນກົດໝາຍ ກ່ຽວກັບການປະເມີນຜົນວຽກງານ.

ທີ່ມ, ກາເຟ ແລະຜະລິດຕະພັນໄມ້ ບໍ່ໄດ້ດີເທົ່າທີ່ຜ່ານມາ. ການສົ່ງອອກຜະລິດຕະພັນ ທາງດ້ານບໍ່ແຮ່ ແລະການພັດທະນາການທ່ອງທ່ຽວ ໄດ້ຮັບການລົງທຶນໂດຍກົງ ຈາກຕ່າງປະເທດ ແລະຊ່ວຍເພີ້ມແຫລ່ງລາຍຮັບເປັນເງິນຕາຕ່າງປະເທດ ຫລາຍກວ່າການນໍາເຂົ້າໃນໄລຍະ 3 ເດືອນ.

11. **ອັດຕາເງິນເຟີ້ຫລຸດລົງຢູ່ໃນລະດັບ 7% ໃນເດືອນ ສິງຫາ 2006 ຈາກ 9% ໃນປີຜ່ານມາ.** ອັດຕາເງິນເຟີ້ຈະຫລຸດລົງເຖິງ 5%. ລາຄານໍ້າມັນຢູ່ໃນຕະຫລາດໂລກທີ່ສູງຂຶ້ນ ຊຶ່ງສ່ວນໃຫຍແລ້ວ ບັນຫາດັ່ງກ່າວກໍໄດ້ຜ່ານໄປ ໄດ້ສ້າງຜົນສະທ້ອນ ໃຫ້ລາຄາສິນຄ້າເພີ້ມຂຶ້ນ. ແຕ່ລັດຖະບານມີຜົນສໍາເລັດ ໃນການຄວບຄຸມການຂາດດຸນທາງງົບປະມານ ເຖິງວ່າຈະມີຄວາມກົດດັນ ກ່ຽວກັບການໃຊ້ຈ່າຍເງິນເດືອນ ແລະການເກັບລາຍຮັບຕໍ່າ. ບັນຫາດັ່ງກ່າວນີ້ເຮັດໃຫ້ ຈໍາເປັນຕ້ອງໄດ້ຫລຸດຄ່າໃຊ້ຈ່າຍບໍລິຫານ ທີ່ບໍ່ແມ່ນເງິນເດືອນລົງ. ການຊ່ວຍເຫລືອລ້າຂອງຕ່າງປະເທດ ແມ່ນຫລຸດລົງຫລາຍ ຖ້າສົມທຽບໃສ່ກັບ ຍອດຜະລິດຕະພັນພາຍໃນແຫ່ງຊາດ ຊຶ່ງມີຄວາມຈໍາເປັນຕ້ອງ ໄດ້ປັບປຸງການສ້າງລາຍຮັບ ແລະ ລາຍຈ່າຍຂອງພັກລັດ ໃຫ້ມີປະສິດທິຜົນ ຖ້າລັດຖະບານຕ້ອງການ ຈະຮັກສາຄວາມສາມາດ ໃນການໃຫ້ການບໍລິການຂັ້ນພື້ນຖານ ແກ່ປະຊາຊົນ ໂດຍປາດສະຈາກ ການແຕະຕ້ອງຄວາມໝັ້ນຄົງ ທາງດ້ານງົບປະມານ.

12. **ໃນປັດຈຸບັນລັດຖະບານແຫ່ງ ສປປ ລາວ ໄດ້ໃຫ້ຄວາມສໍາຄັນ ແກ່ການຈັດຕັ້ງປະຕິບັດວຽກງານເພື່ອບັນລຸເປົ້າໝາຍ ການຫລຸດຜ່ອນຄວາມທຸກຍາກ ແລະສືບຕໍ່ປັບປຸງທາງດ້ານເສດຖະກິດ.** ທີມງານຄຸ້ມຄອງທາງດ້ານເສດຖະກິດ ໄດ້ຖືກແຕ່ງຕັ້ງຂຶ້ນ ຫລັງຈາກເດືອນ ເມສາ 2006. ການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ແມ່ນສຸມໃສ່ການປັບປຸງ ທາງດ້ານການຈັດຕັ້ງ. ມີການດໍາເນີນການ ເພື່ອເປີດປະຕູໃຫ້ແກ່ການຄ້າ ແລະການລົງທຶນຂອງພາກເອກະຊົນ. ວິສາຫະກິດຂອງລັດ ກູ້ຢືມທຶນຮອນຈາກ ທະນາຄານໜ້ອຍລົງ ແລະໄດ້ຮັບການຖົມຊຸມໜ້ອຍລົງ ຈາກລັດຖະບານ, ພ້ອມດຽວກັນນັ້ນ ວິສາຫະກິດຂອງລັດຂະໜາດໃຫຍ່ ກໍາລັງມີການປັບປຸງ ແລະດັດແກ້ຄ່າບໍລິການ ຂອງຕົນຄືນໃໝ່. ແຕ່ການປັບປຸງທະນາຄານ ທຸລະກິດຂອງລັດນັ້ນແມ່ນດໍາເນີນໄປຊ້າກວ່າທີ່ວາງແຜງໄວ້. ມັນມີຄວາມຈໍາເປັນອັນຮີບດ່ວນ ໃນການຈັດຕັ້ງປະຕິບັດສັນຍາກ່ຽວກັບການບໍລິຫານຈັດການ ສະບັບປັບປຸງ ແລະມີການນໍາໃຊ້ທີ່ປຶກສາ ທາງດ້ານທະນາຄານ ຈາກສາກົນໃຫ້ດີຂຶ້ນ. ສິ່ງທີ່ສໍາຄັນກວ່ານັ້ນ ແມ່ນມີຄວາມຈໍາເປັນ ຕ້ອງມີເພື່ອນຮ່ວມງານ ທາງດ້ານຍຸດທະສາດ ຈາກພາກເອກະຊົນ. ເພື່ອປັບປຸງການບໍລິການ ຂອງທະນາຄານຢູ່ໃນປະເທດ ແມ່ນມີຄວາມຈໍາເປັນ ຕ້ອງສ້າງເງື່ອນໄຂ ທີ່ເອື້ອອໍານວຍແບບເທົ່າທຽມກັນ ໃຫ້ແກ່ທະນາຄານທຸລະກິດຂອງລັດ ແລະທະນາຄານທຸລະກິດເອກະຊົນ. ທະນາຄານພັດທະນາອາຊີ ໄດ້ສືບຕໍ່ປຶກສາຫາລື ໃນລະດັບນະໂຍບາຍ ກ່ຽວກັບບັນຫານີ້ ພາຍໃຕ້ໂຄງການປັບປຸງຂະແໜງທະນາຄານ ແລະທະນາຄານໂລກ ໄດ້ຊຸກຍູ້ໃຫ້ລັດຖະບານ ໃນການປັບປຸງຂະແໜງການນີ້ ໃນເວລາມີການກະກຽມ ໂຄງການຫລຸດຜ່ອນຄວາມທຸກຍາກ ໄລຍະທີ III. ການປັບປຸງການໃຊ້ຈ່າຍຂອງລັດ ໄດ້ມີການພັດທະນາໄວ ໃນໄລຍະຫົກເດືອນຜ່ານມາ, ລວມທັງການປຶກສາຫາລື ຢູ່ພາຍໃນ

ລັດຖະບານ ກ່ຽວກັບສາຍພົວພັນ ທາງດ້ານງົບປະມານ ລະຫວ່າງສູນກາງ ແລະທ້ອງຖິ່ນ (ຕົວຢ່າງ ໃຫ້ມີການຄວບຄຸມ ແລະຄຸ້ມຄອງ ຈາກສູນກາງຫລາຍຂຶ້ນ ກ່ຽວກັບການເກັບພາສີ ແລະອາກອນ) ມີການຄຸ້ມຄອງຄັງເງິນແຫ່ງຊາດ ແບບລວມສູນ, ເພີ້ມທະວີການນຳໃຊ້ ຫລັກການທາງດ້ານງົບປະມານ ເພື່ອຮັບປະກັນໃຫ້ການຕັດສິນບັນຫາຢູ່ໃນຂັ້ນແຂວງ ສອດຄ່ອງກັບນະໂຍບາຍບູລິມະສິດຂອງຊາດ. ທະນາຄານໂລກ ແລະທະນາຄານພັດທະນາອາຊີ ໄດ້ສືບຕໍ່ໃຫ້ການຊ່ວຍເຫລືອ ກ່ຽວກັບການປັບປຸງ ວຽກງານດ້ານງົບປະມານ ແລະການໃຊ້ຈ່າຍງົບປະມານ ໃນໄລຍະກາງ.

13. **ຈົດໝາຍຕີລາຄາ ການຈັດຕັ້ງປະຕິບັດວຽກງານ ຄັ້ງຜ່ານມາຂອງ ອົງການກອງທຶນສາກົນ (ກໍລະກົດ 2006) ໄດ້ຢັ້ງຢືນວ່າ ການຄາດຄະເນການຂະຫຍາຍຕົວ ທາງດ້ານເສດຖະກິດໄລຍະກາງ ແມ່ນຈະເປັນໄປໃນທາງທີ່ດີ ຖ້າສາມາດຮັກສາ ນະໂຍບາຍມະຫາພາກໃນປັດຈຸບັນ.** ການພັດທະນາເສດຖະກິດ ໃນໄລຍະກາງ ເປັນວຽກງານທີ່ສຳຄັນ ເພື່ອສົ່ງເສີມການພັດທະນາ ແລະຫລຸດຜ່ອນຄວາມທຸກຍາກ, ຄວາມຄືບໜ້າໃນການປັບປຸງ ໂຄງສ້າງການຈັດຕັ້ງ ແລະການກູ້ຢືມຂອງລັດ ສຳລັບໂຄງການຂະໜາດໃຫຍ່ ຈະບໍ່ສ້າງຜົນກະທົບ ຕໍ່ການຮັກສາລະດັບໜີ້ສິນ. ການຕີລາຄາດັ່ງກ່າວ ຊີ້ໃຫ້ເຫັນບັນຫາຄວາມສ່ຽງ ກ່ຽວກັບການເກັບລາຍຮັບ ຄື: ຄ່າພາກຫລວງ ຫລືຄ່າຊັບພະຍາກອນທຳມະຊາດ ບໍ່ໄດ້ຖືກໂອນຈາກແຂວງ ໄປໃຫ້ງົບປະມານລວມຂອງລັດ, ມີບັນຫາກ່ຽວກັບການຄຸ້ມຄອງ ການເກັບອາກອນ ທີ່ບໍ່ກ່ຽວກັບຊັບພະຍາກອນທຳມະຊາດ ແລະບໍ່ທັນສາມາດຮັບປະກັນ ການຄວບຄຸມຈາກສູນກາງ ກ່ຽວກັບການເກັບພາສີ ແລະອາກອນ. ການເກັບລາຍຮັບຍັງເປັນບັນຫາ ທີ່ຕ້ອງໄດ້ແກ້ໄຂ ຍ້ອນວ່າການຊ່ວຍເຫລືອຂອງຕ່າງປະເທດ ແມ່ນຫລຸດລົງຢ່າງຫລວງຫລາຍ ຖ້າທຽບໃສ່ອັດຕາສ່ວນ ຍອດຜະລິດຕະພັນພາຍໃນແຫ່ງຊາດ ຊຶ່ງຈະສ້າງຜົນກະທົບ ຕໍ່ການປັບປຸງການສະໜອງການບໍລິການ ຂັ້ນພື້ນຖານໃຫ້ແກ່ປະຊາຊົນ.

14. **ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ສະໄໝທີ VI ສະບັບສຸດທ້າຍ ຈະຖືກຮັບຮອງ ແລະປະກາດໃຊ້ໃນມໍ່ໆນີ້.** ແຜນພັດທະນາເສດຖະກິດສັງຄົມ ສະໄໝທີ VI ຈະໃຫ້ທິດຊີ້ນຳ ໃນການປັບປຸງວຽກງານ ໃນໄລຍະ 5 ປີຕໍ່ໜ້າ (2006-2011). ການກະກຽມແຜນດັ່ງກ່າວນີ້ ໄດ້ນຳໃຊ້ຂະບວນການ ໃນການປຶກສາຫາລືແບບມີສ່ວນຮ່ວມ, ອົງການຜູ້ໃຫ້ທຶນ ໄດ້ໃຫ້ຄຳເຫັນຕໍ່ຮ່າງແຜນງານດັ່ງກ່າວ ແຕ່ເດືອນມັງກອນ 2006. ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ສະບັບນີ້ໄດ້ນຳໄປປຶກສາຫາລື ຢູ່ກອງປະຊຸມໃຫຍ່ຂອງພັກ ແລະກອງປະຊຸມສະພາແຫ່ງຊາດ ໃນເດືອນເມສາ ແລະເດືອນມິຖຸນາ 2006 ຕາມລຳດັບ. ແຜນງານດັ່ງກ່າວ ໄດ້ເອົາໃຈໃສ່ວຽກງານ ຫລຸດຜ່ອນຄວາມທຸກຍາກ ແລະແນໃສ່ບັນລຸເປົ້າໝາຍ ການພັດທະນາແຫ່ງສະຫະສະວັດ ແລະຊີ້ໃຫ້ເຫັນມາດຕະການ ທາງດ້ານນະໂຍບາຍ ແລະການລົງທຶນຂອງລັດ ເພື່ອບັນລຸເປົ້າໝາຍດັ່ງກ່າວນັ້ນ. ເພື່ອປັບປຸງສາຍພົວພັນລະຫວ່າງ ຈຸດປະສົງໃນການຈັດຕັ້ງປະຕິບັດວຽກງານ ແລະໂຄງການນຳໃຊ້ທຶນຂອງລັດ, ຄະນະກຳມະການແຜນການ ແລະການລົງທຶນ ໄດ້ຈັດກອງປະຊຸມປຶກສາຫາລື ຫລາຍຄັ້ງກັບ

ກະຊວງ, ຂະແໜງການ ແລະຜູ້ໃຫ້ທຶນ ກ່ຽວກັບການໃຊ້ຈ່າຍງົບປະມານ ທີ່ສະເໜີໂດຍບັນດາກະຊວງຕ່າງໆ ຢູ່ໃນ 4 ຂະແໜງການຕົ້ນຕໍ ຄື: ກະສິກຳ, ຂົນສົ່ງ, ສາທາລະນະສຸກ ແລະການສຶກສາ. ເພື່ອໃຫ້ສາມາດ ຕົກລົງກັນໄດ້ ກ່ຽວກັບການຈັດສັນງົບປະມານ ໄລຍະ 5 ປີຕໍ່ໜ້າໃຫ້ແກ່ຂະແໜງການດັ່ງກ່າວນີ້ ພ້ອມທັງ ການກຳນົດບູລິມະສິດ ວຽກງານທີ່ຈະໄດ້ນຳໃຊ້ງົບປະມານ ຢູ່ໃນຂະແໜງການດັ່ງກ່າວ. ທິດທາງ ແລະ ເປົ້າໝາຍລວມ ກ່ຽວກັບການປັບປຸງ ພາກເອກະຊົນ, ຂະແໜງການຄ້າ, ທະນາຄານ, ວິສາຫະກິດຂອງລັດ ແລະການຄຸ້ມຄອງການເງິນຂອງລັດ ໄດ້ຖືກລະບຸໄວ້ຢູ່ໃນແຜນງານດັ່ງກ່າວ. ຂໍ້ຄົງຄ້າງຢູ່ໃນຮ່າງເອກະສານ ສະບັບດັ່ງກ່າວນີ້ ຕ້ອງໄດ້ຖືກແກ້ໄຂ ລວມທັງການກຳນົດບູລິມະສິດ ແຜນງານກ່ຽວກັບ ການໃຊ້ຈ່າຍງົບ ປະມານ ຢູ່ໃນຂະແໜງການຍ່ອຍ ເພື່ອຫລຸດຜ່ອນຄວາມທຸກຍາກ ແລະການກຳນົດນະໂຍບາຍບູລິມະສິດ ຂອງຂະແໜງການ. ລັດຖະບານແຫ່ງ ສປປ ລາວ ໄດ້ຊີ້ໃຫ້ເຫັນວ່າ ຂໍ້ຄົງຄ້າງດັ່ງກ່າວນີ້ ຈະຖືກແກ້ໄຂຢູ່ໃນ ຮ່າງສະບັບປັບປຸງຂັ້ນສຸດທ້າຍ.

15. **ການໃຫ້ການຊ່ວຍເຫລືອ ເພື່ອລົບລ້າງຄວາມທຸກຍາກ ແມ່ນດຳເນີນໄປຕາມແຜນງານທີ່ກຳນົດໄວ້ ຊຶ່ງໄດ້ຮັບການສະໜັບສະໜູນ ຈາກທະນາຄານໂລກ.** ການໃຫ້ການຊ່ວຍເຫລືອ ເພື່ອຫລຸດຜ່ອນຄວາມທຸກ ຍາກໄລຍະທີ II ໄດ້ຖືກຮັບຮອງໂດຍ ສະພາບໍລິຫານຂອງທະນາຄານໂລກ ໃນເດືອນເມສາ 2006. ລັດຖະບານແຫ່ງ ສປປ ລາວສືບຕໍ່ຕັດສິນໃຈ ໃນການປັບປຸງທາງດ້ານການຈັດຕັ້ງ ຊຶ່ງເຫັນໄດ້ຢູ່ໃນໂຄງການ ຊ່ວຍເຫລືອ ເພື່ອຫລຸດຜ່ອນຄວາມທຸກຍາກ ໃນໄລຍະທີ III. ການຊ່ວຍເຫລືອເພື່ອຫລຸດຜ່ອນຄວາມທຸກ ຍາກ ໃນໄລຍະທີ III ແມ່ນຈະໄດ້ສະເໜີຕໍ່ສະພາບໍລິຫານ ຂອງທະນາຄານໂລກ ໃນໄຕມາດທີສອງ ຂອງປີ 2007. ອົງການຈັດຕັ້ງສາກົນ ສະແດງຄວາມສົນໃຈ ໃນການສະໜອງທຶນ ໃຫ້ແກ່ໂຄງການຊ່ວຍເຫລືອ ເພື່ອ ຫລຸດຜ່ອນຄວາມທຸກຍາກ, ຊຶ່ງອົງການຮ່ວມມືຂອງປະເທດຍີ່ປຸ່ນ ໄດ້ພິຈາລະນາໃນການສະໜອງທຶນ ໃຫ້ ແກ່ໂຄງການຫລຸດຜ່ອນຄວາມທຸກຍາກ ໃນໄລຍະທີ II ແລະໄດ້ວາງແຜນ ໃນການເຂົ້າຮ່ວມວຽກງານ ອົງ ການຫລຸດຜ່ອນຄວາມທຸກຍາກ ໄລຍະທີ III. ສະມາຄົມເອີຣົບ ໄດ້ມີການວາງແຜນ ເລີ້ມສະໜອງທຶນ ໃຫ້ ແກ່ວຽກງານດັ່ງກ່າວນີ້ ຈາກໄຕມາດທີສອງ ຂອງປີ 2007.

16. **ການປັບປຸງການຄຸ້ມຄອງລາຍຈ່າຍຂອງລັດ ໄດ້ຮັບຄວາມເອົາໃຈໃສ່ຢ່າງຫລວງຫລາຍ ໃນໄລຍະ ທີ່ກເດືອນຜ່ານມາ.** ການກວດກາການໃຊ້ຈ່າຍງົບປະມານຂອງລັດ ຮ່ວມກັນລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະຜູ້ໃຫ້ທຶນ ແລະການດຳເນີນການສຳຫລວດ ຕິດຕາມການໃຊ້ຈ່າຍງົບປະມານຂອງລັດ ແມ່ນ ຖືກສືບຕໍ່ຈັດຕັ້ງປະຕິບັດ, ມີການຄາດຄະເນວ່າ ການກວດກາກ່ຽວກັບ ການໃຊ້ຈ່າຍງົບປະມານຂອງລັດ ແມ່ນຈະສຳເລັດໃນເດືອນພະຈິກ 2006 ແລະການສຳຫລວດ ການໃຊ້ຈ່າຍງົບປະມານຂອງລັດ ແມ່ນຈະ ສິ້ນສຸດໃນເດືອນ ກຸມພາ 2007. ຂໍ້ມູນທີ່ໄດ້ຈາກບົດລາຍງານດັ່ງກ່າວນີ້ ຈະລາຍງານການຈັດຕັ້ງປະຕິບັດ

ວຽກງານ ແລະຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດແຜນງານ ປັບປຸງການຄຸ້ມຄອງ ການໃຊ້ຈ່າຍງົບປະມານ.

17. **ການຈັດຕັ້ງປະຕິບັດ ແຜນງານປັບປຸງການຄຸ້ມຄອງ ການໃຊ້ຈ່າຍງົບປະມານຂອງລັດ ແມ່ນມີຄວາມຄືບໜ້າດີ ເຖິງວ່າຈະໄດ້ເລີ້ມຈັດຕັ້ງປະຕິບັດຊ້າ.** ລັດຖະບານແຫ່ງ ສປປ ລາວ ໄດ້ມີການຈັດການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ແລະໄດ້ວ່າຈ້າງທີ່ປຶກສາໄລຍະຍາວ ໃຫ້ມາຊ່ວຍຈັດຕັ້ງປະຕິບັດ ແຜນງານປັບປຸງການຄຸ້ມຄອງ ການໃຊ້ຈ່າຍງົບປະມານຂອງລັດ. ເພື່ອຮັບປະກັນໃຫ້ວຽກງານນີ້ ຖືກຍອບຮັບຢູ່ໃນລະດັບຊາດ ແລະເອົາຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ ຢູ່ໃນລະດັບແຂວງ ເຂົ້າໃນການປັບປຸງແຜນງານປັບປຸງການໃຊ້ຈ່າຍງົບປະມານຂອງລັດ, ລັດຖະບານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມປຶກສາຫາລື ໃນລະດັບຊາດຂຶ້ນສອງຄັ້ງ. ພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ ໄດ້ປະກອບຄຳເຫັນທີ່ສຳຄັນ ເປັນບ່ອນອີງໃຫ້ແກ່ການປັບປຸງ ແຜນງານປັບປຸງການໃຊ້ຈ່າຍ ງົບປະມານຂອງລັດ. ການປັບປຸງແຜນງານດັ່ງກ່າວນີ້ ກຳລັງຖືກຈັດຕັ້ງປະຕິບັດ ໂດຍກົມນະໂຍບາຍການເງິນ ໄດ້ຄາດວ່າເອກະສານ ແຜນງານກ່ຽວກັບການປັບປຸງ ການໃຊ້ຈ່າຍງົບປະມານຂອງລັດ ແລະຖືກດັດແກ້ ແລະຈັດຕັ້ງປະຕິບັດ ຕາມກຳນົດເວລາທີ່ວາງໄວ້, ຊຶ່ງຈະຖືກດັດແກ້ ໃຫ້ເປັນສະບັບສຸດທ້າຍ ໃນເດືອນພະຈິກ 2006 ບາງວຽກງານທີ່ສຳຄັນ ຊຶ່ງເກີດຂຶ້ນຫລັງຈາກການປັບປຸງ ແຜນງານຄັ້ງທີ່ຜ່ານມາມີຄື: (i) ການປັບປຸງລະບຽບການ ທາງດ້ານການບັນຊີ ແລະ ຫ້ອງງົບປະມານ, ແລະມີການຄາດຄະເນວ່າ ລະບຽບການທາງດ້ານ ການບັນຊີຈະໄດ້ຮັບການຮັບຮອງ ໃນຕົ້ນປີ 2007, (ii) ຂໍ້ສະເໜີເພື່ອຮັກສາຄວາມໝັ້ນຄົງ ຂອງລະບົບຂໍ້ມູນທາງດ້ານການເງິນຂອງລັດຖະບານ ໄດ້ຖືກນຳມາຄົ້ນຄວ້າເປັນຄັ້ງສຸດທ້າຍ ແລະໄດ້ມີການເປີດປະມູນ ໃນລະດັບສາກົນ, (iii) ໄດ້ມີການວ່າຈ້າງ ທີ່ປຶກສາສາກົນ ກ່ຽວກັບການພັດທະນາຄວາມສາມາດ ໃນໄລຍະຍາວ, ມີການຈັດໂຄງການຝຶກອົບຮົມພາສາອັງກິດ ສຳລັບພະນັກງານກະຊວງການເງິນ, (iv) ໄດ້ມີການກະກຽມ ດັດແກ້ກົດໝາຍງົບປະມານ, ຊຶ່ງໃນປັດຈຸບັນ ໄດ້ມີການຈັດກອງປະຊຸມ ປຶກສາຫາລືໃນລະດັບສາກົນ, ແລະຄາດຄະເນວ່າຮ່າງການດັດແກ້ ກົດໝາຍງົບປະມານ ຈະຖືກນຳສົ່ງໃຫ້ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາໃນທ້າຍປີນີ້, (v) ມີຄວາມຄືບໜ້າ ກ່ຽວກັບການພັດທະນາ ລະບົບງົບປະມານໃນໄລຍະກາງ ແລະລະບົບກ່ຽວກັບການໃຊ້ຈ່າຍງົບປະມານ ໃນໄລຍະກາງ.

18. **ໃນເດືອນມິຖຸນາ 2006 ລັດຖະບານໄດ້ສ້າງຕັ້ງ ຄະນະກຳມະການ ໃນລະດັບກົມຢູ່ກະຊວງການເງິນ ເພື່ອປະສານງານກ່ຽວກັບ ບັນຫາການຄຸ້ມຄອງລາຍຮັບຂອງລັດ ຊຶ່ງກ່ຽວພັນກັບ ການຈັດການໃນການຄຸ້ມຄອງ ລາຍຮັບຈາກໂຄງການ ນ້ຳເທີນ II.** ຄະນະກຳມະການດັ່ງກ່າວນີ້ ແມ່ນພາຍໃຕ້ການເປັນປະທານ ຂອງຫົວໜ້າກົມນະໂຍບາຍເງິນຕາ ຊຶ່ງເປັນວິທີການ ທີ່ໄດ້ຮັບການຍອມຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ. ຄວາມຄືບໜ້າກ່ຽວກັບການຈັດຕັ້ງປະຕິບັດ ແຜນງານປັບປຸງການຄຸ້ມຄອງ ການໃຊ້ຈ່າຍງົບປະມານຂອງລັດ ມາ

ຮອດປັດຈຸບັນ ແມ່ນເປັນໜ້າພໍໃຈ ແລະສາມາດບັນລຸເງື່ອນໄຂທີ່ສຳຄັນ ກ່ຽວກັບການຈັດການ ການຄຸ້ມຄອງ ລາຍຮັບ ຈາກໂຄງການນ້ຳເທີນ II ຕາມທີ່ໄດ້ລະບຸໄວ້ ຢູ່ເອກະສານຊ້ອນທ້າຍ ທາງດ້ານເຕັກນິກ ຂອງ ຈົດໝາຍແຈ້ງການຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍດັ່ງກ່າວ. ເຖິງຢ່າງໃດກໍຕາມ ກະຊວງຂະແໜງການ ຈຳເປັນຕ້ອງໄດ້ໃຊ້ຄວາມພະຍາຍາມ ໃນການກຳນົດບູລິມະສິດ ວຽກງານຢູ່ໃນຂະ ແໜງການຂອງຕົນໃຫ້ສຳເລັດ ຊຶ່ງຈະມີການນຳໃຊ້ ລາຍຮັບຈາກໂຄງການນ້ຳເທີນ II ເລີ້ມຈາກສົກປີການ ເງິນ 2010.

19. **ກະຊວງການເງິນ ໄດ້ເລີ້ມກະກຽມ ຍຸດທະສາດພັດທະນາ ຄວາມສາມາດແບບຮອບດ້ານ.** ມີການ ຄາດຄະເນວ່າ ຍຸດທະສາດດັ່ງກ່າວ ຈະຖືກສ້າງຂຶ້ນໃຫ້ສຳເລັດ ແລະນຳໄປຈັດຕັ້ງປະຕິບັດ ໃນຕົ້ນປີ 2007. ການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ຮຽກຮ້ອງໃຫ້ມີການປະສານງານ ກັບການຊ່ວຍເຫລືອ ຂອງຜູ້ໃຫ້ ທຶນ. ກ່ຽວກັບບັນຫານີ້, ລັດຖະບານໄດ້ມີແນວຄິດ ໃນການສ້າງຕັ້ງກອງທຶນ ຂອງຜູ້ໃຫ້ທຶນ ເພື່ອໃຫ້ການຊ່ວຍ ເຫລືອ ໂຄງການປັບປຸງການຄຸ້ມຄອງ ວຽກງານການເງິນຂອງລັດ. ກອງທຶນຂອງຜູ້ໃຫ້ທຶນ ຈະໄດ້ນຳເອົາທຶນ ຮອນທີ່ໄດ້ຮັບການຊ່ວຍເຫລືອ ຈາກຜູ້ໃຫ້ທຶນຕ່າງໆ ໃຫ້ແກ່ລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານໃນ ຂົງເຂດນີ້. ຢູ່ໃນໄລຍະຫົກເດືອນຕໍ່ໜ້າ ຈະມີການປຶກສາຫາລືລະຫວ່າງ ລັດຖະບານ ແລະຜູ້ໃຫ້ທຶນ ກ່ຽວກັບ ວິທີການ ໃນການສ້າງຕັ້ງກອງທຶນດັ່ງກ່າວ. ລັດຖະບານ ແລະຜູ້ໃຫ້ທຶນ ຍັງໄດ້ປຶກສາຫາລື ກ່ຽວກັບການສ້າງ ຕັ້ງທີມງານ ກ່ຽວກັບການຄຸ້ມຄອງການເງິນຂອງລັດ.

20. **ການປັບປຸງການກວດສອບບັນຊີ ແມ່ນພາກສ່ວນສຳຄັນຂອງ ວຽກງານກ່ຽວກັບການຄຸ້ມຄອງ ການ ເງິນຂອງລັດ.** ການກວດກາອົງການກວດສອບບັນຊີແຫ່ງລັດ ໂດຍສະມາຊິກຂອງ ສະມາຄົມກວດສອບບັນຊີ ສາກົນ ໄດ້ຖືກຊັກຊ້າອອກໄປ, ແລະໃນປັດຈຸບັນຄາດວ່າຈະສຳເລັດ ໃນຕົ້ນປີ 2007. ການໃຫ້ການຊ່ວຍ ເຫລືອທາງດ້ານເຕັກນິກ ຈາກທະນາຄານພັດທະນາອາຊີ ເພື່ອປັບປຸງອົງການກວດສອບ ບັນຊີແຫ່ງລັດ ແມ່ນຍັງສືບຕໍ່ ຈັດຕັ້ງປະຕິບັດ, ໂດຍມີການຈັດກອງປະຊຸມຝຶກອົບຮົມ, ດຳເນີນການກວດສອບບັນຊີ ດຳ ເນີນການກວດສອບໂຄງການ ກູ້ຢືມຈາກຕ່າງປະເທດ, ວິສາຫະກິດຂອງລັດ, ບົດລາຍງານທາງດ້ານການ ເງິນຂອງລັດຖະບານ ແລະມີການຈັດຝຶກອົບຮົມພາສາອັງກິດ. ການຊ່ວຍເຫລືອຈາກ ທະນາຄານພັດທະນາ ອາຊີ ຍັງລວມເອົາການຈັດກອງປະຊຸມ ກ່ຽວກັບວຽກງານກົດໝາຍ ຊຶ່ງມີການເຂົ້າຮ່ວມຂອງ ອົງການກວດ ສອບບັນຊີແຫ່ງລັດ ຂອງປະເທດຫວຽດນາມ, ອົງການກວດສອບບັນຊີແຫ່ງລັດ ຂອງ ສປປ ລາວ ແລະພາກ ສ່ວນຕ່າງໆທີ່ກ່ຽວຂ້ອງ, ກອງປະຊຸມດັ່ງກ່າວນັ້ນ ໄດ້ຈັດຂຶ້ນໃນເດືອນ ມີນາ 2006 ທີ່ນະຄອນຫລວງວຽງຈັນ. ການຈັດການຝຶກອົບຮົມດັ່ງກ່າວນັ້ນ ໄດ້ໃຫ້ບົດຮຽນທີ່ເປັນປະໂຫຍດ ຕໍ່ອົງການກວດສອບບັນຊີແຫ່ງລັດ ແລະຍັງມີການກະກຽມ ຮ່າງກົດໝາຍກ່ຽວກັບ ການກວດສອບບັນຊີ ເພື່ອນຳສະເໜີສະພາບແຫ່ງຊາດ ພິຈາລະນາຮັບຮອງ ໃນທ້າຍປີ 2006. ທະນາຄານພັດທະນາອາຊີ ຍັງໄດ້ໃຫ້ການສະໜັບສະໜູນ ແກ່ອົງ

ການກວດສອບບັນຊີແຫ່ງລັດ ໃນການເຂົ້າຮ່ວມກອງປະຊຸມ ຂອງອົງການກວດສອບບັນຊີສູງສຸດ ຢູ່ທະວີບອາຊີໃນເດືອນ ກັນຍາ 2006.

## III. ການຈັດຕັ້ງປະຕິບັດໂຄງການ ໄຟຟ້ານ້ຳຕົກນ້ຳເທີນ 2

21. **ການຈັດຕັ້ງປະຕິບັດໂຄງການ ນ້ຳເທີນ 2 ແມ່ນສືບຕໍ່ດຳເນີນໄປຕາມແຜນການ.** ຫລັງຈາກມີການອ່ວຍແລວນ້ຳ ໃນຕົ້ນເດືອນມີນາ 2006, ການກໍ່ສ້າງເຂື່ອນຊົ່ວຄາວ ໄດ້ຖືກຈັດຕັ້ງປະຕິບັດສຳເລັດ ແລະເຂື່ອນຖາວອນ ໄດ້ເລີ້ມເທຊີມັງ, ທໍ່ສົ່ງນ້ຳ ແລະ ອຸໂມງ, ເຮືອນຈັກ ແລະວຽກງານຢູ່ກ້ອງເຂື່ອນ ລວມທັງເຂື່ອນ ແລະອ່າງພັກນ້ຳ ຮ່ອງລະບາຍນ້ຳຢູ່ກ້ອງເຂື່ອນ ແມ່ນຢູ່ໃນຂັ້ນຕອນການກໍ່ສ້າງ. ໂດຍລວມແລ້ວວຽກງານການກໍ່ສ້າງ ແມ່ນຢູ່ໃນຄຸນນະພາບທີ່ດີ. ມີບາງວຽກງານເທົ່ານັ້ນ ທີ່ມີຄວາມຊັກຊ້າ. ບໍລິສັດໄຟຟ້ານ້ຳເທີນ 2 ຍັງສາມາດຮັກສາສັນຍາ ກັບບໍລິສັດຫົວໜ້າການກໍ່ສ້າງ ເພື່ອປັບປຸງຕາຕະລາງ ກ່ຽວກັບການກໍ່ສ້າງໃຫ້ສາມາດດຳເນີນໄປຕາມແຜນການ. ຄວາມຢ້ານກົວກ່ຽວກັບ ການເກີດຄ່າໃຊ້ຈ່າຍເພີ້ມຂຶ້ນ ແບບບໍ່ໄດ້ຄາດຄະເນນັ້ນ ໄດ້ຖືກຫລຸດຜ່ອນລົງ, ໂດຍສະເພາະວຽກງານ ເຈາະພື້ນດິນ ສ່ວນໃຫຍ່ແມ່ນຖືກຈັດຕັ້ງປະຕິບັດສຳເລັດ. ຢູ່ໃນໄລຍະກາງຂອງເດືອນ ກໍລະກົດ 2006 ເຫັນວ່າກຳມະກອນທີ່ເຮັດວຽກ ຢູ່ໃນສະຖານທີ່ກໍ່ສ້າງ ທັງໝົດປະມານ 6,570 ຄົນ (80% ແມ່ນຄົນລາວ) ແລະຈຳນວນກຳມະກອນ ແມ່ນຈະເພີ້ມຂຶ້ນເປັນ 10,000 ຄົນໃນທ້າຍປີ 2006 ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງວຽກງານ ຢູ່ໃນໄລຍະລະດູແລ້ງໃນປີໜ້າ ການກໍ່ສ້າງໃນປັດຈຸບັນ ແມ່ນໄປຄຽງຄູ່ກັບການຈັດຕັ້ງ ມາດຕະການຫລຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ແລະສັງຄົມ, ຂໍສະແດງຄວາມຂອບໃຈ ຕໍ່ການຈັດຕັ້ງປະຕິບັດແຜນງານປັບປຸງການຍົກຍ້າຍຈັດສັນ ແລະການເອົາໃຈໃສ່ແກ້ໄຂ ບັນຫາສິ່ງແວດລ້ອມຫລາຍຂຶ້ນ. ວຽກງານດັ່ງກ່າວນີ້ຈະຊ່ວຍໃຫ້ສາມາດສຳເລັດການກໍ່ສ້າງ ດ້ວຍການໃຊ້ຈ່າຍງົບປະມານ ຕາມທີ່ກຳນົດໄວ້ ແລະເລີ້ມກັກນ້ຳໄວ້ໃນອ່າງ ຕັ້ງແຕ່ເດືອນພຶດສະພາ 2008 ແລະສາມາດເລີ້ມດຳເນີນການຜະລິດ ເພື່ອການຄ້າໃນເດືອນ ທັນວາ 2009.

22. **ຄວາມຄືບໜ້າຂອງການກໍ່ສ້າງ ສ່ວນໜຶ່ງແມ່ນໂຄງການ ບໍ່ໄດ້ຮັບຜົນກະທົບ ຈາກລະດູຝົນທີ່ຜ່ານມາ.** ເຖິງວ່າລະດູຝົນຈະເລີ້ມຕົ້ນຊ້າປະມານ 2 ຫລື 3 ອາທິດ ຊຶ່ງການໄຫລຂອງນ້ຳຢູ່ນ້ຳເທີນ ໃນໄລຍະນັ້ນແມ່ນຕ່ຳທີ່ສຸດ, ມີຝົນຕົກແຮງ ຢູ່ໃນໄລຍະເດືອນ ກໍລະກົດ ຊຶ່ງຊຸກຍູ້ໃຫ້ມີການວາງແຜນ ເພື່ອຢຸດຕິການກໍ່ສ້າງ ຢູ່ໃນເຂດທີ່ຈະໄດ້ຮັບຜົນກະທົບ ຈາກຝົນຕົກຫລາຍ (ຕົວຢ່າງ ສະຖານທີ່ກໍ່ສ້າງເຂື່ອນກັ້ນນ້ຳ). ວຽກງານກໍ່ສ້າງຢູ່ໃນເຂດດັ່ງກ່າວ ໄດ້ຖືກໂຈະໄວ້ຊົ່ວຄາວ ເຖິງວ່າຈະມີຝົນຕົກໜ້ອຍ ຢູ່ໃນເດືອນສິງຫາທີ່ຜ່ານມາ. ລະດູແລ້ງໄດ້ເລີ້ມຂຶ້ນ ແລະການກໍ່ສ້າງໄດ້ເລີ້ມສືບຕໍ່ ຈັດຕັ້ງປະຕິບັດ ເຮັດໃຫ້ໂຄງການສາມາດ ດຳເນີນວຽກງານໃຫ້ທັນຕາມແຜນການທີ່ກຳນົດໄວ້.

**23. ການຄຸ້ມຄອງຜົນກະທົບ ທາງດ້ານສິ່ງແວດລ້ອມ ຊຶ່ງພົວພັນກັບການກໍ່ສ້າງ ໄດ້ຮັບການປັບປຸງ, ແຕ່ ຜົນຂອງວຽກງານດັ່ງກ່າວ ແມ່ນຍັງບໍ່ທັນມີຫລັກຖານຢ່າງຈະແຈ້ງ.** ການຄຸ້ມຄອງຜົນກະທົບທາງດ້ານສິ່ງແວດລ້ອມ ຈາກການກໍ່ສ້າງ ຂອງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແມ່ນຍັງເປັນສິ່ງທ້າທາຍ ເຊັ່ນດຽວກັນກັບການປະສານງານລະຫວ່າງ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2, ບໍລິສັດຫົວໜ້າການກໍ່ສ້າງ ແລະລັດຖະບານແຫ່ງ ສປປ ລາວ/ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ, ໃນການປັບປຸງການກວດກາ ບໍລິສັດຫົວໜ້າການກໍ່ສ້າງ. ໃນປັດຈຸບັນ ບັນຫາດັ່ງກ່າວນີ້ ໄດ້ຮັບການເອົາໃຈໃສ່ ຈາກຜູ້ບໍລິຫານລະດັບສູງ ຂອງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະໄດ້ມີການສືບຕໍ່ປັບປຸງທີມງານ ຄຸ້ມຄອງສິ່ງແວດລ້ອມຂອງຕົນ. ຫົວໜ້າຫ້ອງການສິ່ງແວດລ້ອມຂອງບໍລິສັດຜູ້ໃໝ່ ຊຶ່ງມີປະສົບການສູງ ໃນວຽກງານວິສະວະກຳ ແລະການຄຸ້ມຄອງສິ່ງແວດລ້ອມ ໄດ້ເຂົ້າມາເຮັດວຽກໃນໂຄງການ. ເພື່ອແກ້ໄຂບັນຫາ ຄວາມເປັນຫ່ວງເປັນໄຍ ກ່ຽວກັບການເຊາະເຈື່ອນ ແລະການຕົກຕະກອນ ໄດ້ມີການນຳໃຊ້ມາດຕະການຫລາຍດ້ານ ໂດຍບໍລິສັດຫົວໜ້າການກໍ່ສ້າງ. ບົດລາຍງານຂອງນັກວິສະວະກອນ ຂອງຜູ້ໃຫ້ທຶນ ຊຶ່ງໄດ້ມີການນຳໃຊ້ ຂໍ້ມູນກ່ຽວກັບການຕົກຕະກອນ ຊຶ່ງມີການປ່ອຍນ້ຳ ໄປສູ່ນ້ຳກະຕັ່ງ ສະແດງໃຫ້ເຫັນຜົນໄດ້ຮັບທີ່ດີ, ໃນປັດຈຸບັນບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ກຳລັງຕີລາຄາເພື່ອຂະຫຍາຍວຽກງານດັ່ງກ່າວນີ້ ໄປສູ່ສະຖານທີ່ກໍ່ສ້າງແຫ່ງອື່ນ. ເຕັກນິກໃນການປູກພືດ, (ການປູກດ້ວຍແກ່ນ ແລະການປູກດ້ວຍວິທີການອື່ນ) ໄດ້ຖືກດຳເນີນຢູ່ໃນໄລຍະລະດູຝົນ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ວ່າຈ້າງຜູ້ຊ່ຽວຊານຢູ່ໃນຂະແໜງການນີ້ ເພື່ອໃຫ້ການຊ່ວຍເຫລືອແກ່ ບໍລິສັດຫົວໜ້າການກໍ່ສ້າງ ໃນການຈັດຕັ້ງປະຕິບັດບົດຮຽນ ທີ່ຖອດຖອນໄດ້ ເພື່ອປູກຫຍ້າ ແລະນຳໃຊ້ມາດຕະການ ຄວບຄຸມການເຊາະເຈື່ອນ. ເຂດຍົກຍ້າຍຈັດສັນ ເປັນເຂດທີ່ມີການບຸກເບີກກ້ຽງ ໂດຍບໍ່ມີຫຍ້າຍ້ອນຜູ້ໄປຕັ້ງຖິ່ນຖານ ຢາກໄດ້ເນື້ອທີ່ທີ່ຮາບພຽງ ເພື່ອປູກໄມ້ ແລະປູກຕົ້ນໄມ້ເປັນໝາກ, ແຕ່ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ມີການປັບປຸງການວາງແຜນ ເພື່ອປົກປັກຮັກສາສິ່ງແວດລ້ອມ ໃນເວລາກໍ່ສ້າງເຂດຍົກຍ້າຍຈັດສັນ. ມີການດຳເນີນງານກ່ຽວກັບການຄຸ້ມຄອງສິ່ງເສດເຫລືອ ໂດຍໄດ້ໃຫ້ການບໍລິການ ແກ່ຄ້າຍພັກກຳມະກອນທຸກແຫ່ງ ແລະສະຖານທີ່ກໍ່ສ້າງຕ່າງໆ ໂດຍມີການແຍກສິ່ງເສດເຫລືອ ເປັນປະເພດທີ່ສາມາດນຳໄປຜະລິດຄືນໃໝ່ໄດ້ ແລະນ້ຳມັນທີ່ເປັນສິ່ງເສດເຫລືອຈາກໂຄງການ ໄດ້ເອົາໄປນຳໃຊ້ຢູ່ໂຮງງານເຈ້ຍ ເພື່ອເປັນເຊື້ອເພີງສຳລັບເຕົາຕົ້ມເຍື່ອເຈ້ຍ. ເພື່ອແກ້ໄຂບັນຫາກ່ຽວກັບຂີ້ຝຸ່ນຕາມຫ້ອງຖະໜົນ ຊຶ່ງມີລັກສະນະເພີ້ມຂຶ້ນ ຍ້ອນວຽກງານການກໍ່ສ້າງ (ໂດຍສະເພາະຢູ່ໃນລະດູແລ້ງ) ໄດ້ມີການຣົດນ້ຳເພີ້ມຂຶ້ນ ຢູ່ໃນລະດູແລ້ງ. ລັດຖະບານ ແລະບໍລິສັດໄຟຟ້ານ້ຳເທີນ 2 ຍັງໄດ້ຕົກລົງປູຢາງທາງເລກທີ 12 ຈາກທ່າແຂກຫາທາງສີ່ແຍກ ລະຫວ່າງຖະໜົນເລກທີ 8B ແລະຖະໜົນເລກທີ 12, ວຽກງານດັ່ງກ່າວນີ້ ຈະສຳເລັດໃນປີ 2007. ເພື່ອຫລຸດຜ່ອນຜົນກະທົບ ທາງດ້ານສຸຂະພາບ ຕໍ່ຊຸມຊົນທ້ອງຖິ່ນ ໃນເຂດພູພຽງຍ້ອນຂີ້ຝຸ່ນຕາມຖະໜົນ ໄດ້ມີການສືບຕໍ່ປຶກສາຫາລື ກ່ຽວກັບການປູທາງເລກທີ 8B (ຢ່າງໜ້ອຍແມ່ນຢູ່ເຂດຊຸມຊົນ)

24. **ບັນຫາກ່ຽວກັບການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການສ້າງທໍ່ລະບາຍນໍ້າ, ການຄວບຄຸມການເຊາະເຈື່ອນ ແລະການປູກຫຍ້າ ຕາມເສັ້ນທາງເຂົ້າໄປຫາເຂື່ອນ ໄດ້ນຳມາປຶກສາຫາລື.** ເຖິງວ່າຈະມີການເຊັນສັນຍາ ແລະຕົກລົງສະເພາະ ກ່ຽວກັບເງື່ອນໄຂໃນການກໍ່ສ້າງ ເສັ້ນທາງໄປຫາສະຖານທີ່ກໍ່ສ້າງເຂື່ອນກັບລັດຖະບານ (ຊຶ່ງມີການວາງແຜນ ກໍ່ສ້າງຜ່ານເຂດເຊື່ອມຕໍ່ ທາງດ້ານຊີວະນາໆພັນ) ຕາມການພິຈາລະນາຂອງ ຄະນະຊ່ຽວຊານແລ້ວ ເຫັນວ່າມີການຕັດໄມ້ ແບບກວ້າງຂວາງເກີນໄປ ບໍ່ເໝາະສົມກັບການອອກແບບ ແລະບໍ່ສອດຄ່ອງກັບສະພາບຕົວຈິງ. ທີມງານຜູ້ຊ່ຽວຊານໄດ້ປຶກສາຫາລື ກັບບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ເພື່ອແກ້ໄຂບັນຫາ ແນໃສ່ຫລຸດຜ່ອນຜົນກະທົບ ຕໍ່ສິ່ງແວດລ້ອມ ແຕ່ວ່າການຕັດໄມ້ ຕາມເຂດໝາຍທຳອິດນັ້ນ ໄດ້ຖືກຈັດຕັ້ງປະຕິບັດໄປແລ້ວ. ທີມງານທີ່ປຶກສາ ໄດ້ໃຫ້ຂໍ້ແນະນຳວ່າ ຈຳເປັນຕ້ອງໄດ້ມີການຄຸ້ມຄອງ ການໄຫລຂອງນໍ້າ ຕາມເນີນພູທີ່ບໍ່ໄດ້ຮັບການປົກປ້ອງ ແລະມີການເລັ່ງປູກຫຍ້າ ເພື່ອຫລີກເວັ້ນການເຊາະເຈື່ອນລົງສູ່ນໍ້າເທີນ. ຜູ້ຊ່ຽວຊານຄວບຄຸມການເຊາະເຈື່ອນ ແລະການປູກຫຍ້າຂອງບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ໄດ້ມີການສ້າງແຜນການສະເພາະ ສຳລັບຖະໜົນສາຍດັ່ງກ່າວ, ຊຶ່ງລວມເອົາການປູກຕົ້ນໄມ້ຄືນໃໝ່ຢູ່ບາງເຂດ. ການຖາງປ່າຢູ່ຕາມແຄມຖະໜົນ 8B ຊຶ່ງຈະກາຍເປັນ ເຂດແຄມອ່າງເກັບນໍ້າຢູ່ພູພຽງນາກາຍ ແລະການຂ້າມອ່າງນໍ້າເທີນ 2 ກໍເປັນບັນຫາທີ່ຕ້ອງໄດ້ປຶກສາຫາລື ເພື່ອນຳມາແກ້ໄຂ. ກ່ຽວກັບບັນຫາດັ່ງກ່າວນີ້ ບໍລິສັດໄຟຟ້ານໍ້າເທີນ 2 ໄດ້ກວດກາການອອກແບບ ແລະການດຳເນີນການກໍ່ສ້າງຂອງຜູ້ຮັບເໝົາກໍ່ສ້າງ ເພື່ອຫລຸດຜ່ອນຈຳນວນຫຍ້າ ແລະພືດ ທີ່ຈະຖືກຕັດ. ບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ຍັງໄດ້ມີການດຳເນີນການກວດກາ ທາງດ້ານສິ່ງແວດລ້ອມ ກ່ຽວກັບການອອກແບບ ໃນການກໍ່ສ້າງເສັ້ນທາງໃນຊ່ວງທີ່ຕັດຜ່ານອ່າງເກັບນໍ້າ ກ່ອນທີ່ຈະອະນຸຍາດ ໃຫ້ດຳເນີນການກໍ່ສ້າງ. ໃນນາມເປັນຕົວແທນຂອງ ສະຖາບັນການເງິນສາກົນ, ທະນາຄານພັດທະນາອາຊີ ຈະສົ່ງນັກວິສະວະກອນຂົວທາງ ໄປດຳເນີນການຕີລາຄາ ປະເມີນຜົນສັນຍາ ທີ່ໄດ້ເຊັນກັນລະຫວ່າງ ບໍລິສັດໄຟຟ້ານໍ້າເທີນ 2 ແລະ ບໍລິສັດກໍ່ສ້າງ ເພື່ອທົບທວນການອອກແບບ ຖະໜົນສາຍດັ່ງກ່າວນີ້.

25. **ການດຳເນີນວຽກງານການກໍ່ສ້າງ ແມ່ນໄປຄຽງຄູ່ກັບຄວາມຄືບໜ້າ ໃນການປັບປຸງການຍົກຍ້າຍຈັດສັນ.** ໃນປັດຈຸບັນແມ່ນຍັງຢູ່ໃນໄລຍະເລີ້ມຕົ້ນ ກ່ຽວກັບການຈັດຕັ້ງປະຕິບັດ ແຜນງານຍົກຍ້າຍຈັດສັນຢູ່ນາກາຍ ຊຶ່ງມີຄວາມຊັກຊ້າ ໃນການຈັດຕັ້ງປະຕິບັດ, ເຮັດໃຫ້ເກີດຄວາມເປັນຫ່ວງເປັນໄຍ ວ່າວຽກງານຍົກຍ້າຍຈັດສັນ ຈະສາມາດດຳເນີນໄປຄຽງຄູ່ ກັບວຽກງານການກໍ່ສ້າງຄືແນວໃດ ໂດຍສະເພາະຜົນກະທົບ ຈາກນໍ້າຖ້ວມ ຊຶ່ງຈະເກີດຈາກການກໍ່ສ້າງ ແລະການປິດເຄື່ອງສຳຮອງ ໃນກາງປີ 2006. ໂດຍມີການເລັ່ງລັດຈັດຕັ້ງປະຕິບັດ ໂຄງການຍົກຍ້າຍຈັດສັນປະຊາຊົນ (ສຸມໃສ່ໝູ່ບ້ານທີ່ຢູ່ໃນກຸ່ມທີ I) ໄດ້ເຮັດໃຫ້ວຽກງານ ໄດ້ຮັບການປັບປຸງ, ຄວາມຊັກຊ້າໃນການ ຈັດຕັ້ງປະຕິບັດວຽກງານ ໄດ້ຖືກຫລຸດຜ່ອນລົງ ແລະຜົນກະທົບທີ່ຈະເກີດຂຶ້ນ ຈາກການປິດເຂື່ອນສຳຮອງ ໄດ້ຖືກແກ້ໄຂ. ແຕ່ວ່າແຜນການເພື່ອຍົກຍ້າຍໝູ່ບ້ານ ສອງແຫ່ງຈາກພູພຽງນາກາຍ ທີ່ຢູ່ໃນເມືອງຄຳເກີດ (ບ້ານສົບເຫ້ຍ ແລະບ້ານນໍ້າງຽນ) ແມ່ນຍັງມີຄວາມບໍ່ແນ່ນອນ ເພາະ

ສ່ວນໜຶ່ງຂອງປະຊາຊົນ ແມ່ນໄດ້ຖືກຍົກຍ້າຍໄປບ້ານນ້ຳປັນ ຢູ່ເມືອງຄຳເກີດຢູ່ກ້ອງພູພຽງລົງໄປ. ສະຖານທີ່ຍົກຍ້າຍຈັດສັນດັ່ງກ່າວນີ້ ຖືກຍົກເລີກໄປ ຍ້ອນບັນຫາກ່ຽວກັບມົນລະພິດນ້ຳ (ຊຶ່ງບໍ່ກ່ຽວກັບໂຄງການນ້ຳເທີນ 2). ແຕ່ວ່າມີ 26 ຄອບຄົວແມ່ນມີຄວາມຕ້ອງການ ສືບຕໍ່ດຳເນີນຊີວິດຢູ່ເມືອງ ຄຳເກີດ. ໄດ້ມີການຊອກຫາເຂດຍົກຍ້າຍຈັດສັນໃໝ່ ຢູ່ເມືອງຄຳເກີດ ພ້ອມທັງມີການປຶກສາຫາລື ຄວາມເປັນໄປໄດ້ ໃນການສືບຕໍ່ອາໃສຢູ່ເຂດພູພຽງດັ່ງກ່າວ. ພ້ອມດຽວກັນນັ້ນ ໄດ້ມີການອອກແບບ ແລະກະກຽມສະຖານທີ່ຕັ້ງໝູ່ບ້ານໃໝ່ ສຳລັບໝູ່ບ້ານຢູ່ໃນກຸ່ມທີ II. ຄາດວ່າການຍົກຍ້າຍຈັດສັນ ໝູ່ບ້ານດັ່ງກ່າວ ຈະສຳເລັດກ່ອນເດືອນ ມິຖຸນາ 2007.

26. **ການຕັ້ງຖິ່ນຖານຢູ່ເຂດນາກາຍ ແມ່ນສືບຕໍ່ມີຄວາມຄືບໜ້າທີ່ດີ.** ເກືອບ 600 ຄອບຄົວຈາກ 8 ໝູ່ບ້ານ ໄດ້ຖືກຍົກຍ້າຍ ໄປຢູ່ສະຖານທີ່ຕັ້ງຖິ່ນຖານໃໝ່ ພາຍໃຕ້ໂຄງການເລັ່ງລັດ ການຍົກຍ້າຍຈັດສັນ ຊຶ່ງໄດ້ຖືກອອກແບບຂຶ້ນ ເພື່ອແກ້ໄຂບັນຫາຜົນກະທົບ ຈາກນ້ຳທ້ວມຫລັງຈາກສິ້ນສຸດ ການກໍ່ສ້າງເຂື່ອນສຳຮອງ.[5] ພາຍໃຕ້ແຜນງານດັ່ງກ່າວນີ້, ມີຄອບຄົວຈຳນວນໜຶ່ງ ໄດ້ມີການຍົກຍ້າຍ ດ້ວຍຄວາມສະໝັກໃຈ ເປັນການຊົ່ວຄາວ ເພື່ອໄປຢູ່ທີ່ຢູ່ໃໝ່ ທີ່ຢູ່ຕາມແຄມຝັ່ງ ອ່າງເກັບນ້ຳໃນອະນາຄົດ ເພື່ອປັບປຸງເງື່ອນໄຂການດຳລົງຊີວິດຂອງຕົນ ໂດຍໄດ້ຮັບການຊ່ວຍເຫລືອ ຈາກບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2. ການຕັ້ງຖິ່ນຖານໃນໄລຍະດັ່ງກ່າວນີ້ ແມ່ນຊຸກຍູ້ການປັບຕົວ ຈາກໝູ່ບ້ານເກົ່າ ໄປຢູ່ເຂດຕັ້ງຖິ່ນຖານໃໝ່ ແລະໄດ້ມີການຊຸກຍູ້ໃຫ້ຊາວບ້ານເຂົ້າຮ່ວມວຽກງານ ແຕ່ເບື້ອງຕົ້ນ ໃນການກະກຽມກໍ່ສ້າງເຮືອນ ແລະແບ່ງປັນທີ່ຢູ່ທຳກິນຄືນໃໝ່. ຈາກການລົງໄປຢ້ຽມຢາມ ສະຖານທີ່ຕັ້ງຖິ່ນຖານໃໝ່ ສະແດງໃຫ້ເຫັນວ່າ ແຜນການເລັ່ງລັດການຍົກຍ້າຍຈັດສັນ ໄດ້ໃຫ້ຜົນປະໂຫຍດແກ່ຄອບຄົວ ທີ່ໄດ້ຍົກຍ້າຍຈັດສັນໄປຕັ້ງຖິ່ນຖານໃໝ່ ແລະສາມາດຊ່ວຍຮັບປະກັນ ທາງດ້ານສະບຽງອາຫານ ໂດຍສະເພາະຫລັງຈາກລະດູຝົນ. ການວາງແຜນເພື່ອປັບປຸງ ຊີວິການເປັນຢູ່ຂອງຊາວບ້ານແບບລະອຽດ ແມ່ນມຄວາມຄືບໜ້າ ໂດຍມີວຽກງານຕ່າງໆ ໃນນັ້ນລວມເອົາ ການກຳນົດແຜນທີ່ ຊັບພະຍາກອນທີ່ດິນ ແລະການວິໃຈ ແລະ ປຶກສາຫາລື ກ່ຽວກັບການປັບປຸງຊີວິດການເປັນຢູ່, ແຕ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້ ຈຳເປັນແມ່ນຕ້ອງໄດ້ໃຫ້ທັນກັບວຽກງານ ການເລັ່ງລັດຍົກຍ້າຍຈັດສັນ. ໃນປັດຈຸບັນວຽກງານດັ່ງກ່າວນີ້ ແມ່ນມີຈຳກັດສະເພາະແຕ່ ໝູ່ບ້ານຍົກຍ້າຍຈັດສັນກຸ່ມທີ I ເທົ່ານັ້ນ ແລະຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານ ຂອງໝູ່ບ້ານດັ່ງກ່າວ ແມ່ນມີຄວາມແຕກຕ່າງກັນ. ການພັດທະນາ ໂຄງການປັບປຸງຊີວິດການເປັນຢູ່ ຍັງແມ່ນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ, ແຕ່ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ລະດົມທີ່ປຶກສາທີ່ສຳຄັນ ໂດຍສະເພາະຢູ່ໃນຂະແໜງ ພັດທະນາກະສິກຳ ໃຫ້ເຂົ້າມາ

[5] ໃນເວລາການໄຫລຂອງນ້ຳເທີນ ເກີນລະດັບຄວາມສາມາດຮອງຮັບ ຂອງທໍ່ອ່ວຍນ້ຳ (ໂດຍທົ່ວໄປແລ້ວແມ່ນລະຫວ່າງເດືອນ ມິຖຸນາ ຫາ ເດືອນຕຸລາ, ແຕ່ສາມາດເກີດຂຶ້ນໄດ້ ຢູ່ໃນໄລຍະເດືອນເມສາ ຫາ ພະຈິກ), ລະດັບນ້ຳໄຫລທີ່ເກີນກວ່າຄວາມສາມາດຮອງຮັບ ໄດ້ຜ່ານເຂື່ອນສຳຮອງ ແລະເຂື່ອນຖາວອນ ທີ່ກໍ່ສ້າງແລ້ວສ່ວນໜຶ່ງນັ້ນ ຊຶ່ງທຳໜ້າທີ່ຈຳກັດ ການໄຫລຂອງນ້ຳຕາມທຳມະຊາດ ຊຶ່ງຈະພາໃຫ້ລະດັບນ້ຳຢູ່ໃນແມ່ນ້ຳເພີ້ມຂຶ້ນ ແລະສາມາດສ້າງຜົນກະທົບຕໍ່ໝູ່ບ້ານ ທີ່ຢູ່ທາງເໜືອຂອງເຂື່ອນ.

ຊ່ວຍໃນການຈັດຕັ້ງປະຕິບັດວຽກງານ ແລະເປົ້າໝາຍໃນການຈັດຕັ້ງປະຕິບັດວຽກງານນັ້ນ ແມ່ນຍັງສາມາດເປັນໄປໄດ້ຕາມແຜນການ. ອີງຕາມການປຶກສາຫາລືກັບ ທີມງານວິຊາການຂອງ ສະຖາບັນການເງິນສາກົນ, ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຈະແກ້ໄຂບັນຫາດັ່ງຕໍ່ໄປນີ້ ເພື່ອປັບປຸງໂຄງການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ: (i) ຈຳກັດຈຳນວນສັດໃຫຍ່ ຢູ່ເຂດພູພຽງ ຢູ່ໃນຂອບເຂດ ທີ່ສາມາດຮັບປະກັນ ຄວາມຍືນຍົງ; (ii) ຊອກຫາວິທີການຢຸດຕິການປູກເຂົ້າ ຢູ່ເຂດທີ່ໄດ້ມີການກຳນົດເປັນເຂດໂຄງການ; (iii) ພັດທະນາຄວາມສາມາດຂອງກຸ່ມເປົ້າໝາຍ ເພື່ອເພີ່ມທະວີການຄຸ້ມຄອງປ່າໄມ້ ແລະຊັບພະຍາກອນທຳມະຊາດ ຂອງຊຸມຊົນ. ການຂາດເຂີນໄມ້ ເພື່ອນຳໃຊ້ເຂົ້າໃນການກໍ່ສ້າງ ເຮືອນຢູ່ໃໝ່ໃຫ້ແກ່ປະຊາຊົນນັ້ນ ໄດ້ຮັບການເອົາໃຈໃສ່ໂດຍລັດຖະບານ ແລະໄດ້ມີການພິຈາລະນາ ທາງເລືອກຫລາຍດ້ານ ຢູ່ໃນໄລຍະເດືອນພະຈິກ 2006 ໃນເວລາມີຄະນະທີມງານກວດກາ ຂອງສະຖາບັນການເງິນສາກົນ ລົງມາຢ້ຽມຢາມໂຄງການ. ໂຄງການສຸຂະພາບສຳລັບປະຊາຊົນ ເຂດຍົກຍ້າຍຈັດສັນ ແມ່ນມີຄວາມຄືບໜ້າດີ. ຫ້ອງການສາທາລະນະສຸກເມືອງ ໄດ້ຖືກສ້າງຕັ້ງຂຶ້ນ ແລະໄດ້ຮັບການປັບປຸງ ພ້ອມກັນນັ້ນກໍມີການວ່າຈ້າງ ພະນັກງານສາທາລະນະສຸກເພີ່ມເຕີມ. ພະນັກງານສາທາລະນະສຸກດັ່ງກ່າວ ໄດ້ລົງໄປຢ້ຽມຢາມ ໝູ່ບ້ານຈັດສັນໃໝ່ຢ່າງເປັນປົກກະຕິ ແລະໄດ້ດຳເນີນການກວດສຸຂະພາບ ໃຫ້ແກ່ປະຊາຊົນ ຈາກການດຳເນີນວຽກງານ ຍັງບໍ່ທັນໄດ້ພົບເຫັນ ພະຍາດຕິດແປດ ຫລືບັນຫາທີ່ເປັນຫ່ວງ ຕໍ່ສຸຂະພາບຂອງປະຊາຊົນ ຊຶ່ງຕິດພັນກັບການຍົກຍ້າຍຈັດສັນຂະໜາດໃຫຍ່. ຈາກການສຳຫລວດເກັບກຳຂໍ້ມູນ ທາງດ້ານສຸຂະພາບ ຢູ່ໃນໝູ່ບ້ານທົດລອງ ເຫັນວ່າສຸຂະພາບຂອງປະຊາຊົນ ຢູ່ໃນໝູ່ບ້ານຈັດສັນນັ້ນ ໄດ້ຮັບການປັບປຸງຂຶ້ນ. ທີມງານສາທາລະນະສຸກຂອງໂຄງການ ຍັງໄດ້ຕິດຕາມຢ່າງໃກ້ຊິດ ຕໍ່ສຸຂະພາບຂອງປະຊາຊົນ ໃນໝູ່ບ້ານຈັດສັນໃໝ່.

27. **ບັນຫາກ່ຽວກັບທີ່ດິນຂອງໂຄງການ, ມີຄວາມຄືບໜ້າກ່ຽວກັບ ການພັດທະນາໂຄງການ ປັບປຸງຊີວິດການເປັນຢູ່, ແຕ່ການຈັດຕັ້ງປະຕິບັດວຽກງານ ໃຫ້ທັນກັບເວລນັ້ນ ແມ່ນຍັງເປັນສິ່ງທ້າທາຍ.** ທີ່ດິນສ່ວນໃຫຍ່ຂອງໂຄງການ ແມ່ນໄດ້ຖືກເວນໃຫ້ແກ່ ໂຄງການສຳເລັດ. ບາງສ່ວນຂອງຖະໜົນຂອງໂຄງການ, ໂດຍສະເພາະແລວສາຍສົ່ງ ຈຳເປັນຕ້ອງໄດ້ເວນໃຫ້ແກ່ໂຄງການ. ໄດ້ມີການຊົດເຊີຍໃນເບື້ອງຕົ້ນ ໃຫ້ແກ່ເຈົ້າຂອງທີ່ດິນ ທີ່ສູນເສຍຜົນລະປູກຈຳນວນ 579 ຄອບຄົວ, ຊຶ່ງ 390 ຄອບຄົວ ໄດ້ຮັບຜົນກະທົບຮ້າຍແຮງ (ສູນເສຍຫລາຍກວ່າ 10% ຂອງລາຍຮັບຂອງເຂົາເຈົ້າ) ແລະໄດ້ຮັບການຟື້ນຟູ ການດຳລົງຊີວິດການເປັນຢູ່. ສ່ວນທີ່ຍັງເຫລືອນັ້ນ ຈະໄດ້ຮັບການຊົດເຊີຍເປັນເງິນສົດ, ຊຶ່ງຈະໄດ້ເລີ້ມຈັດຕັ້ງປະຕິບັດຢູ່ບາງເຂດ ໂດຍມີຄວາມຄືບໜ້າແຕກຕ່າງກັນ ຢູ່ໃນທີ່ດິນແຕ່ລະຕອນ. ພ້ອມດຽວກັນນັ້ນ ບໍລິສັດໄຟຟ້ານ້ຳເທີນ 2 ກຳລັງກວດກາແຜນຍົກຍ້າຍຈັດສັນ ທີ່ກ່ຽວຂ້ອງໃຫ້ສຳເລັດ ໂດຍການເອົາຄຳຄິດຄຳເຫັນ ຂອງສະຖາບັນການເງິນສາກົນເຂົ້າໃນແຜນດັ່ງກ່າວ ແລະໄດ້ມີການລິເລີ້ມຈັດຕັ້ງປະຕິບັດ ໂຄງການພັດທະນາຊີວິດການເປັນຢູ່ ຂອງປະຊາຊົນ ໂດຍສະເພາະຢູ່ເຂດເມືອງ ຍົມມະລາດ ທີ່ມີການເວນທີ່ດິນຢ່າງຫລວງຫລາຍ ໃຫ້ແກ່ໂຄງການ (ໂດຍສະເພາະກ່ຽວກັບການສ້າງ ຄອງສົ່ງນ້ຳຢູ່ກ້ອງເຂື່ອນ. ສິ່ງທ້າທາຍຢູ່ໃນເມືອງຍົມມະລາດ ແມ່ນການ

ສ້າງແຜນງານລະອຽດໃຫ້ສຳເລັດ ແລະການຈັດຕັ້ງປະຕິບັດວຽກງານ ປັບປຸງຊີວິດການເປັນຢູ່ ຢ່າງຖືກສ່ວນ ເພື່ອໃຫ້ການຊ່ວຍເຫລືອ ແກ່ຄອບຄົວທີ່ໄດ້ຮັບຜົນກະທົບຮ້າຍແຮງ). ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຮັບການຮ້ອງຮຽນ ກ່ຽວກັບບັນຫາການຊົດເຊີຍຄ່າເສຍຫາຍ ຢູ່ບ່າງໝູ່ບ້ານ ເຂດເມືອງຍົມມະລາດ. ກ່ຽວກັບບັນຫານີ້ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະລັດຖະບານແຫ່ງ ສປປ ລາວ ກຳລັງກວດກາຄືນ ການໃຊ້ຈ່າຍຄ່າຊົດເຊີຍ ຢູ່ໃນໝູ່ບ້ານດັ່ງກ່າວ ເພື່ອຊອກຫາຄວາມບໍ່ພໍໃຈທີ່ເກີດຂຶ້ນ. ຈາກການກວດກາການຈ່າຍຄ່າຊົດເຊີຍເຫັນວ່າການຮ້ອງຮຽນສ່ວນໃຫຍ່ ແມ່ນເກີດຂຶ້ນຈາກຄວາມບໍ່ເຂົ້າໃຈ ກ່ຽວກັບນະໂຍບາຍ ຕໍ່ສິດໃນການໄດ້ຮັບຄ່າຊົດເຊີຍ. ການຮ້ອງຮຽນດັ່ງກ່າວ ເຮັດໃຫ້ສາມາດເຖິງຄວາມຕ້ອງການ ໃນການປັບປຸງຂັ້ນຕອນຕິດຕາມກວດກາວຽກງານພາຍໃນ ຊຶ່ງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ບໍ່ມີຂໍ້ມູນຢ່າງເຕັມສ່ວນ ທີ່ສາມາດສະໜອງໃຫ້ແກ່ປະຊາຊົນ ແລະສາມາດສື່ສານກັບປະຊາຊົນໄດ້. ທີມງານຍົກຍ້າຍຈັດສັນຢູ່ຂັ້ນເມືອງ ທີ່ມີໜ້າທີ່ຕີລາຄາ ແລະຈ່າຍຄ່າຊົດເຊີຍໃຫ້ແກ່ ຜູ້ໄດ້ຮັບຄວາມເສຍຫາຍ ແມ່ນໄດ້ຮັບການປັບປຸງ ຍ້ອນມີພະນັກງານທີ່ສາມາດເວົ້າພາສາ ມະໂຂງ (Makhong).

28. **ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ໃຊ້ຄວາມພະຍາຍາມ ເພື່ອປັບປຸງໜ່ວຍງານສິ່ງແວດລ້ອມ ແລະສັງຄົມຂອງຕົນ.** ບໍລິສັດໄດ້ວ່າຈ້າງທີ່ປຶກສາ ດ້ານສັງຄົມ ແລະ ສິ່ງແວດລ້ອມ, ທີ່ປຶກສາກ່ຽວກັບການຍົກຍ້າຍຈັດສັນ, ທີ່ປຶກສາບົດບາດຍິງຊາຍ ແລະທີ່ປຶກສາວຽກງານຊົນເຜົ່າສ່ວນນ້ອຍ ໃຫ້ໄປເຮັດວຽກຢູ່ ໂຄງການຍົກຍ້າຍຈັດສັນ ເຂດນາກາຍ ແລະໄດ້ມີການຕິດຕາມກວດກາ ຜົນກະທົບທາງດ້ານສັງຄົມ ແລະສິ່ງແວດລ້ອມ. ນອກຈາກນັ້ນບໍລິສັດ ຍັງໄດ້ວ່າຈ້າງທີ່ປຶກສາ ເພື່ອຊ່ວຍປັບປຸງທີມງານ ອອກແບບທາງດ້ານວິຊາການຕ່າງໆ. ການປັບປຸງຄວາມສາມາດ ຈະກາຍເປັນວຽກງານທີ່ສຳຄັນ ໃນເວລາແຜນງານຍົກຍ້າຍຈັດສັນ ຖືກຈັດຕັ້ງປະຕິບັດ ແລະນຳໄປຂະຫຍາຍຢ່າງກວ້າງຂວາງ.

29. **ຫລັງຈາກການເລີ້ມຕົ້ນຄ່ອນຊ້າງຊ້າ, ໂຄງການສັດປ່າ ໄດ້ຖືກຈັດຕັ້ງປະຕິບັດ.** ໂຄງການໄລຍະທີໜຶ່ງ ກ່ຽວກັບວຽກງານປົກປ້ອງຊ້າງປ່າ ໄດ້ຖືກຈັດຕັ້ງປະຕິບັດສຳເລັດ, ຍົກເວັ້ນການວິໃຈແຫລ່ງພັນທຸກຳຂອງສັດດັ່ງກ່າວ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ມີການເຈລະຈາກັບ ສະມາຄົມອະນຸລັກສັດປ່າ ກ່ຽວກັບການຈັດຕັ້ງປະຕິບັດ ໂຄງການໃນໄລຍະທີສອງ, ແຕ່ໄດ້ມີການຈັດການເພື່ອເຮັດໃຫ້ ວຽກງານພາກສະໜາມໄດ້ຖືກສືບຕໍ່ຈັດຕັ້ງປະຕິບັດ. ໂຄງການໄລຍະທີສອງ ຈະເລີ້ມຈັດຕັ້ງປະຕິບັດ ໂດຍມີການກະກຽມ ແຜນງານຄຸ້ມຄອງຊ້າງ. ມາດຕະການອັນຮີບດ່ວນທີ່ສຸດ ຂອງວຽກງານໃນໂຄງການດັ່ງກ່າວນີ້ ແມ່ນການສຳຫລວດເກັບກຳຂໍ້ມູນເບື້ອງຕົ້ນ ແລະແຜນຄຸ້ມຄອງສັດປ່າ ສຳລັບເຂດພູພຽງ. ທີມງານທີ່ປຶກສາ (ຊຶ່ງມີນັກຊີວະສາດທີ່ມີປະສົບການສູງ ຢູ່ ສປປ ລາວ) ໄດ້ຖືກຄັດເລືອກວ່າຈ້າງ ເຂົ້າມາເຮັດວຽກງານ ແລະໄດ້ມີການລົງຢ້ຽມຢາມສະຖານທີ່ໂຄງການ ໃນເບື້ອງຕົ້ນແລ້ວ.

**30. ອົງການຄຸ້ມຄອງ ແລະປົກປັກຮັກສາອ່າງໂຕ່ງ ແມ່ນມີຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ຕັ້ງແຕ່ຖືກສ້າງຕັ້ງຂຶ້ນມາ.** ອົງການດັ່ງກ່າວນີ້ ເປັນອົງການຈັດຕັ້ງທີ່ຫ້າວຫັນ ສະແດງໃຫ້ເຫັນຄວາມສາມາດຂອງອົງການ ໃນການຈັດຕັ້ງປະຕິບັດວຽກງານ ທີ່ມີຄຸນນະພາບໃນພາກສະໜາມ ໂດຍການຮ່ວມມືກັບຊາວບ້ານ ແລະອຳນາດການປົກຄອງທ້ອງຖິ່ນ. ອົງການຄຸ້ມຄອງ ແລະປົກປັກຮັກສາອ່າງໂຕ່ງ ໄດ້ສຳເລັດການວາງແຜນ ການນຳໃຊ້ທີ່ດິນ ແລະປັບປຸງຊີວິດການເປັນຢູ່ ໃນໄລຍະທຳອິດ ຢູ່ໃນເກົ້າໝູ່ບ້ານ; ອົງການດັ່ງກ່າວໄດ້ໃຫ້ການຊ່ວຍເຫລືອ ຂັ້ນພື້ນຖານແກ່ການບໍລິການ ທາງດ້ານສາທາລະນະສຸກ ແລະການສຶກສາ ຢູ່ໃນເຂດອ່າງໂຕ່ງ ແລະໄດ້ມີການປັບປຸງລະບົບ ປະຕິບັດວຽກງານຂອງຕົນ ທີມງານທີ່ປຶກສາ ກ່ຽວກັບການຕິດຕາມກວດກາວຽກງານ ຂອງອົງການຄຸ້ມຄອງ ແລະປົກປັກຮັກສາອ່າງໂຕ່ງ ໄດ້ດຳເນີນສອງຄັ້ງ ຢູ່ໃນໄລຍະປີ 2005/2006, ຂໍ້ມູນທີ່ພົບເຫັນ ສ່ວນໃຫຍ່ແລ້ວແມ່ນເປັນດ້ານບວກ. ທີມງານທີ່ປຶກສາ ຍັງໄດ້ໃຫ້ຄຳເຫັນ ຕໍ່ການຈັດຕັ້ງປະຕິບັດວຽກງານຂອງ ອົງການຄຸ້ມຄອງ ແລະປົກປັກຮັກສາອ່າງໂຕ່ງ. ສິ່ງທ້າທາຍສ່ວນຫລາຍ ຍັງແມ່ນການແກ້ໄຂບັນຫາ ກ່ຽວກັບການປະສານງານ, ການຄຸ້ມຄອງບໍລິຫານ ແລະການລາຍງານ, ເພື່ອພັດທະນາຄວາມສາມາດ ແລະສິດໜ້າທີ່ໃນການຈັດຕັ້ງປະຕິບັດ ວຽກງານຢ່າງເຕັມສ່ວນນັ້ນ ອົງການຄຸ້ມຄອງ ແລະ ປົກປັກຮັກສາອ່າງໂຕ່ງ ຈະມີການພິມເຜີຍແຜ່ ບົດລາຍງານປະຈຳປີ ສະບັບທຳອິດຂອງຕົນ ແລະແຜນງານໄລຍະປີ 2006/2007 ຈະຖືກປະກາດໃຊ້ໃນມໍ່ໆນີ້ ຫລັງຈາກໄດ້ຮັບການກວດກາຈາກສະພາບໍລິຫານ.

**31. ແຜນງານຢູ່ກ້ອງເຂື່ອນ ແມ່ນກຳລັງໄດ້ຮັບການພັດທະນາ ແລະໄດ້ມີການເລີ້ມຕົ້ນ ຈັດຕັ້ງປະຕິບັດວຽກງານທົດລອງ ຢູ່ໃນ 21 ໝູ່ບ້ານ.** ທີມງານທີ່ປຶກສາຂອງ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ສັງລວມແຜນງານການຟື້ນຟູ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍອີງໃສ່ວຽກງານຂອງຕົນ ທີ່ໄດ້ຈັດຕັ້ງປະຕິບັດ ຢູ່ໃນໝູ່ບ້ານທົດລອງ. ຮ່າງບົດລາຍງານດັ່ງກ່າວ ໄດ້ຖືກກວດກາໂດຍ ສະຖາບັນການເງິນສາກົນ ແລະທີ່ປຶກສາໄດ້ເອົາຄຳເຫັນ ຂອງສະຖາບັນການເງິນສາກົນ ເຂົ້າໃນບົດລາຍງານສະບັບສຸດທ້າຍ. ການຈັດຕັ້ງປະຕິບັດແຜນງານດັ່ງກ່າວ ໄດ້ເລີ້ມຂຶ້ນຢູ່ໃນ 21 ໝູ່ບ້ານທົດລອງ. ໂດຍອີງໃສ່ບົດຮຽນ ຈາກໂຄງການທີ່ໄດ້ຮັບການສະໜັບສະໜູນ ຈາກທະນາຄານໂລກ ແລະທະນາຄານພັດທະນາອາຊີ, ແຜນງານປັບປຸງຊີວິດການເປັນຢູ່ ຂອງປະຊາຊົນເຂດກ້ອງເຂື່ອນ ບໍ່ແມ່ນການໃຫ້ການຊ່ວຍເຫລືອລ້າ ແກ່ປະຊາຊົນ. ໃນຕົວຈິງຊາວບ້ານ ໄດ້ເລີ້ມທົດລອງນຳໃຊ້ກອງທຶນໝູນວຽນ ເພື່ອສະໜອງສິນເຊື່ອຂະໜາດນ້ອຍ ໃຫ້ແກ່ວຽກງານການສ້າງລາຍຮັບປະເພດຕ່າງໆ (ລວມທັງວຽກງານກະສິກຳປູກຝັງ ເຊັ່ນການປູກຜັກ, ຕົ້ນໄມ້ກິນໝາກ, ການລ້ຽງປາ, ການເຮັດນາ, ການລ້ຽງສັດ ແລະທຸລະກິດຂາຍເຄື່ອງຍ່ອຍ). ຊຶ່ງມີການກຳນົດໂດຍການປຶກສາຫາລືໃນກຸ່ມຊາວບ້ານ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ວ່າຈ້າງຜູ້ຊ່ຽວຊານທາງດ້ານການເງິນ ເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດ ວຽກງານການເງິນຈຸລະພາກ ເພື່ອຂະຫຍາຍບົດຮຽນດັ່ງກ່າວ ອອກໃນມຸມກວ້າງ. ບໍລິສັດຍັງໄດ້ມີການວ່າຈ້າງພະນັກງານ ເພື່ອຂະຫຍາຍບົດຮຽນ ຈາກການທົດລອງ. ການຕິດຕາມ

ກວດກາດ້ານການປະມົງ ໄດ້ດໍາເນີນຢູ່ໃນເຂດກ້ອງເຂື່ອນ ສ່ວນໃຫຍ່ຕັ້ງແຕ່ເດືອນມັງກອນ 2006 ແລະ ໄດ້ມີການເກັບກໍາຂໍ້ມູນໃນປັດຈຸບັນ. ນອກຈາກນັ້ນການສໍາຫລວດຂໍ້ມູນກ່ຽວກັບ ຊີວະນາໆພັນໃນນໍ້າ ໄດ້ຖືກຈັດຕັ້ງປະຕິບັດໃນເດືອນ ພຶດສະພາ 2006 ພາຍໃຕ້ໂຄງການ ສັດປ່າ ເພື່ອປັບປຸງຂໍ້ມູນ ກ່ອນການຈັດຕັ້ງປະຕິບັດໂຄງການ.

32. **ວິທີການຕັດໄມ້ອອກຈາກອ່າງໂຕ່ງ ໄດ້ຖືກຕົກລົງເປັນຂັ້ນສຸດທ້າຍ.** ມີຄວາມຫຍຸ້ງຍາກ ໃນການກໍານົດຄູ່ສັນຍາ ທີ່ມີຄວາມຕ້ອງການຕັດໄມ້ອອກຈາກອ່າງໂຕ່ງ ທີ່ກຽມພ້ອມຈ່າຍຄ່າສໍາປະທານ ກ່ອນການຕັດໄມ້ຢູ່ໃນໄລຍະລະດູແລ້ງ ຂອງປີ 2005-2006. ບັນຫາດັ່ງກ່າວນີ້ ເຮັດໃຫ້ມີການປ່ຽນແປງ ກ່ຽວກັບການເຮັດສັນຍາ. ກະຊວງກະສິກໍາ ແລະປ່າໄມ້ ໄດ້ເຮັດສັນຍາກັບບໍລິສັດທ້ອງຖິ່ນ ເພື່ອຕັດໄມ້ ແລະ ສິ່ງໄປສະໜາມທີສອງ ເພື່ອປະມູນຂາຍໄມ້ດັ່ງກ່າວ. ມີການຊອກຫາບໍລິສັດ ເພື່ອດໍາເນີນການຕັດໄມ້ ແລະມີການໝາຍເຂດການຕັດໄມ້, ຊຶ່ງການຕັດໄມ້ໃນຕົວຈິງ ແມ່ນຈະເລີ້ມໃນລະດູແລ້ງປີນີ້ (ແຕ່ເດືອນພະຈິກ 2006 ຫາ ເມສາ 2007). ຈະເຮັດໃຫ້ຍັງມີເວລາອີກສອງລະດູແລ້ງ ເພື່ອດໍາເນີນການຂຸດຄົ້ນໄມ້ນ້ອຍ ແລະຫຍ້າອອກຈາກເຂດອ່າງເກັບນໍ້າ, ກະຊວງກະສິກໍາ ແລະ ປ່າໄມ້ ເຫັນວ່າມີເວລາພຽງພໍ ທີ່ຈະເກັບກູ້ໄມ້ ທີ່ເປັນທຸລະກິດ ແລະການຂຸດຄົ້ນໄມ້ທີ່ຍັງເຫລືອນັ້ນ ແມ່ນຈະດໍາເນີນຫລັງຈາກເລີ້ມມີການກັກນໍ້າຢູ່ອ່າງ ຊຶ່ງຈະສາມາດເຂົ້າໄປຫາ ໄມ້ທີ່ຕ້ອງການຕັດໄດ້ ຢູ່ໃນລະດູແລ້ງ. ການກໍ່ສ້າງທາງ ເພື່ອຕັດໄມ້ອອກຈາກເຂື່ອນ ແມ່ນຈະສໍາເລັດ ໃນໄລຍະຕົ້ນຂອງລະດູແລ້ງ ພ້ອມກັນນັ້ນກໍຈະມີການ ເລີ້ມຕັດໄມ້. ໄດ້ມີຄວາມຊັກຊ້າກ່ອນການຄາດຄະເນໄວ້ ກ່ຽວກັບຄວາມຄືບໜ້າ ໃນການສັງລວມແຜນການ ໃນຂັ້ນສຸດທ້າຍ ເພື່ອຕິດຕາມກວດກາ ແລະຄຸ້ມຄອງການຕັດໄມ້ ຍ້ອນວ່າຜູ້ປະສານງານຜູ້ເກົ່າ ໄດ້ອອກຈາກວຽກໄປ. ປັດຈຸບັນກະຊວງກະສິກໍາ ແລະປ່າໄມ້ ໄດ້ແຕ່ງຕັ້ງຜູ້ປະສານງານໃໝ່ ຊຶ່ງມີໜ້າທີ່ເຮັດວຽກຢ່າງໃກ້ຊິດ ເພື່ອດໍາເນີນການຈັດການ ທີ່ມີຄວາມຈໍາເປັນໃຫ້ສໍາເລັດ. ນອກຈາກນັ້ນລັດຖະບານແຫ່ງ ສປປ ລາວ ແລະບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ຕົກລົງວ່າຈ້າງ ອົງການກວດກາສິ່ງແວດລ້ອມເອກະລາດ ໃນທ້າຍເດືອນຕຸລາ 2006 ເພື່ອຕິດຕາມກວດກາ ການຂຸດຄົ້ນໄມ້ຈາກເຂດອ່າງໂຕ່ງ.

33. **ການພິຈາລະນາ ກ່ຽວກັບທາງເລືອກ ໃນການອະນາໄມ ສານຊີວະພາບ ຈາກອ່າງໂຕ່ງແມ່ນຍັງກໍາລັງດໍາເນີນຢູ່.** ໂດຍຖືກເປັນພາກສ່ວນໜຶ່ງ ຂອງແຜນງານປະເມີນຜົນ ແລະຄຸ້ມຄອງສິ່ງແວດລ້ອມ, ການປະເມີນເງື່ອນໄຂ ກ່ຽວກັບການອະນາໄມ ສານຊີວະພາບ ແລະຜົນກະທົບຕໍ່ຄຸນນະພາບນໍ້າ ແມ່ນກໍາລັງດໍາເນີນຢູ່. ມີການສຶກສາທາງເລືອກ ກ່ຽວກັບການອະນາໄມ ສານຊີວະພາບ ໂດຍສະເພາະຜົນກະທົບຂອງມັນຕໍ່ຄຸນນະພາບຂອງນໍ້າ ຢູ່ໃນອ່າງເກັບນໍ້າ ແລະການປະເມີນຢູ່ໃນອ່າງເກັບນໍ້າ, ຊຶ່ງແມ່ນໂຄງການສໍາຄັນ ກ່ຽວກັບການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ຢູ່ໃນເຂດຈັດສັນນາກາຍ, ທີ່ຍັງບໍ່ທັນປະຕິບັດສໍາເລັດ. ບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ໄດ້ອອກແບບມາດຕະການຫລຸດຜ່ອນຜົນກະທົບ ເພື່ອຫລີກເວັ້ນຜົນກະທົບ

ທີ່ຈະເກີດຂຶ້ນ ຕໍ່ຄຸນນະພາບຂອງນ້ຳໃນອ່າງໂຕ່ງ ໂດຍອີງໃສ່ການສົມມຸດຖານ ສະພາບການທີ່ຮ້າຍແຮງທີ່ສຸດຂອງຄຸນນະພາບນ້ຳ ແລະ ສານຊີວະພາບ, ແລະໄດ້ມີການວ່າຈ້າງທີ່ປຶກສາ ເພື່ອກວດກາເບິ່ງຄວາມຈຳເປັນໃນການອະນາໄມສານຊີວະພາບ. ວຽກງານນີ້ຈະບໍ່ທ່ວງດຶງ ການດຳເນີນການຂຸດຄົ້ນໄມ້ ອອກຈາກອ່າງເກັບນ້ຳ, ມັນມີຄວາມຈຳເປັນ ທີ່ຕ້ອງປະຕິບັດວຽກງານດັ່ງກ່າວນີ້ ໃຫ້ສຳເລັດໄວເທົ່າທີ່ຈະໄວໄດ້ ແລະເລີ້ມຕົ້ນອະນາໄມອ່າງໂຕ່ງ ເພື່ອຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ. ທະນາຄານໂລກ ແລະທະນາຄານພັດທະນາອາຊີ ສືບຕໍ່ດຳເນີນການປຶກສາຫາລື ກັບລັດຖະບານ ແລະບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ກ່ຽວກັບບັນຫາດັ່ງກ່າວນີ້.

## IV. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

34. **ການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນຍັງສືບຕໍ່ດຳເນີນ ຢູ່ທຸກເຂດຂອງໂຄງການ ພາຍໃຕ້ການວາງແຜນ ແລະຈັດຕັ້ງປະຕິບັດວຽກງານ ດ້ານຕ່າງໆ.** ການປຶກສາຫາລື ຢູ່ທຸກຂົງເຂດຂອງໂຄງການແມ່ນໄດ້ດຳເນີນໄປ ເພື່ອຮັບປະກັນການມີສ່ວນຮ່ວມ ໃນວຽກງານໃນແຕ່ລະວັນ ລະຫວ່າງຊາວບ້ານ ແລະພະນັກງານໂຄງການ ຢູ່ໃນການວາງແຜນ ແລະຈັດຕັ້ງປະຕິບັດວຽກງານດ້ານຕ່າງໆ. ຊາວບ້ານມີຄວາມຕື່ນຕົວ ກ່ຽວກັບສິດໃນການ ຮັບການຊົດເຊີຍຄ່າເສຍຫາຍ ແລະຂັ້ນຕອນໃນການແກ້ໄຂບັນຫາທີ່ເກີດຂຶ້ນ, ພວກເຂົາເຈົ້າມີຄວາມເຊື່ອໝັ້ນ ໃນການແກ້ໄຂບັນຫາ ຮ່ວມກັບພະນັກງານຂອງ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະພະນັກງານຂອງລັດຖະບານ ສປປ ລາວ. ທະນາຄານໂລກໄດ້ວ່າຈ້າງ ທີ່ປຶກສາເອກະລາດ ເພື່ອຕີລາຄາຂະບວນການປຶກສາຫາລື ກັບປະຊາຊົນທ້ອງຖິ່ນ ໃນໄລຍະກະກຽມໂຄງການ ໃນປີ 2004. ທີ່ປຶກສາທີ່ໄດ້ຕິດຕາມກວດກາ ການປຶກສາຫາລື ທີ່ດຳເນີນກ່ອນໜ້ານີ້ ເພື່ອຕີລາຄາເບິ່ງການເປີດກວ້າງ, ຄວາມດຸ່ນດ່ຽງ ແລະຄວາມມີປະໂຫຍດຂອງຂະບວນການ ປຶກສາຫາລືກັບປະຊາຊົນ, ທີ່ປຶກສາໄດ້ດຳເນີນການ ຕີລາຄາປະເມີນຜົນວຽກງານດັ່ງກ່າວ ແລະຄາດວ່າຈະສຳເລັດ ໃນທ້າຍປີນີ້.

35. **ການພັດທະນາຄວາມສາມາດ ຂອງຝ່າຍລັດຖະບານ ຍັງເປັນບັນຫາທີ່ຕ້ອງໄດ້ເອົາໃຈໃສ່.** ລັດຖະບານແຫ່ງ ສປປ ລາວ ໄດ້ໃຊ້ຄວາມພະຍາຍາມ ໃນການຍົກລະດັບຄວາມສາມາດຂອງຕົນ ເພື່ອປະຕິບັດພັນທະ ພາຍໃຕ້ໂຄງການນ້ຳເທີນ 2, ຜົນກະທົບລວມໃນວຽກງານດັ່ງກ່າວນີ້ ຍັງມີຂອບເຂດຈຳກັດ. ລັດຖະບານໄດ້ແຕ່ງຕັ້ງ ຜູ້ບໍລິຫານໜ່ວຍງານຄຸ້ມຄອງການຈັດສັນຂຶ້ນໃໝ່ ໃນເດືອນພຶດສະພາ 2006, ແຕ່ຍັງເຫັນວ່າຍັງໄວເກີນໄປ ທີ່ຈະສາມາດຕີລາຄາຄວາມຄືບໜ້າ ຂອງວຽກງານດັ່ງກ່າວໄດ້. ກະຊວງກະສິກຳປ່າໄມ້ ໄດ້ແຕ່ງຕັ້ງພະນັກງານປ່າໄມ້ ຂັ້ນອະວຸໂສເພື່ອເຮັດວຽກຮ່ວມກັບ ສະມາຄົມປ່າໄມ້ຊາວບ້ານ ເຂດນາກາຍ ແລະຍັງໄດ້ແຕ່ງຕັ້ງຜູ້ຮັບຜິດຊອບ ນຳພາການດຳເນີນການຂຸດຄົ້ນໄມ້ ຈາກເຂດອ່າງເກັບນ້ຳ. ແຕ່ວ່າ

ໃນເວລາລົງກວດກາໂຄງການຄັ້ງຜ່ານມາ ໃນເດືອນສິງຫາ 2006 ທີມງານຜູ້ຊ່ຽວຊານ ໄດ້ຊີ້ໃຫ້ເຫັນວ່າ ລັດຖະບານ ຍັງຂາດອົງການ ທີ່ເປັນຜູ້ຮັບຜິດຊອບ ວຽກງານໃນການປະສານງານ ກັບອົງການຕ່າງໆ ທີ່ເຂົ້າຮ່ວມວຽກງານ ໂຄງການນໍ້າເທີນ 2 ເພື່ອເຮັດໃຫ້ລັດຖະບານສາມາດ ປະຕິບັດພັນທະຂອງຕົນ ຕາມໂຄງການນໍ້າເທີນ 2 ໄດ້ຢ່າງມີປະສິດທິຜົນ. ບັນຫາດັ່ງກ່າວນີ້ ເຮັດໃຫ້ວຽກງານມີຄວາມຊັກຊ້າ ແລະບໍ່ມີປະສິດທິຜົນ. ໃນການແກ້ໄຂບັນຫາດັ່ງກ່າວນີ້ ທີມງານທີ່ປຶກສາ ສະເໜີໃຫ້ລັດຖະບານ ສ້າງຕັ້ງຄະນະກຳມະການຊີ້ນຳການຈັດຕັ້ງປະຕິບັດວຽກງານ ກ່ຽວກັບໂຄງການນໍ້າເທີນ 2 ພາຍໃຕ້ການເປັນປະທານຂອງ ຮອງນາຍົກລັດຖະມົນຕີ ຊຶ່ງໄດ້ລົງໄປຢ້ຽມຢາມ ໂຄງການສອງຄັ້ງແລ້ວ ຫລັງຈາກເດືອນກັນຍາ ເປັນຕົ້ນມາ. ສະຖາບັນການເງິນສາກົນ ໄດ້ສືບຕໍ່ສະເໜີໃຫ້ລັດຖະບານ ປັບປຸງກອງເລຂາຂອງຄະນະກຳມະການ ຊີ້ນຳວຽກງານໂຄງການນໍ້າເທີນ 2.

36. **ໂຄງການສືບຕໍ່ດຶງດູດຄວາມສົນໃຈຂອງສາກົນ ແລະ ເຮັດໃຫ້ມີການຖົກຖຽງບັນຫາ**. ໂຄງການໄຟຟ້ານໍ້າຕົກນໍ້າເທີນ 2 ຂອງສື່ສານມວນຊົນ, ນັກຮຽນນັກສຶກສາ, ອົງການຈັດຕັ້ງສັງຄົມ, ສະມາຊິກລັດຖະສະພາ, ອົງການຜູ້ໃຫ້ທຶນ ແລະພາກສ່ວນທີ່ກ່ຽວຂ້ອງ. ລັດຖະບານແຫ່ງ ສປປ ລາວ ແລະບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ໄດ້ອຳນວຍຄວາມສະດວກ ໃຫ້ແກ່ການມາຢ້ຽມຢາມໂຄງການດັ່ງກ່າວ ຊຶ່ງເກີດຂຶ້ນເກືອບທຸກອາທິດ ຫລັງຈາກເລີ້ມດຳເນີນໂຄງການ ແລະໃຫ້ພາກສ່ວນທີ່ກ່ຽວຂ້ອງ ສາມາດໄປທ່ຽວຊົມສະຖານທີ່ຕ່າງໆຂອງໂຄງການໄດ້ ຢ່າງບໍ່ມີການປິດບັງ. ລັດຖະບານແຫ່ງ ສປປ ລາວ, ບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ແລະສະຖາບັນການເງິນສາກົນ ໄດ້ສະໜອງຂໍ້ມູນໃຫ້ແກ່ມວນຊົນ ໂດຍຜ່ານຫລາຍຮູບແບບ (ລວມທັງການເຜີຍແຜ່ ຂໍ້ມູນຜ່ານສື່ສານມວນຊົນ ການຕອບຄຳຖາມຂອງສື່ສານມວນຊົນ ແລະອົງການຈັດຕັ້ງສັງຄົມ). ແລະໄດ້ມີການຕົກລົງ ໃນການຍົກລະດັບຄວາມຕື່ນຕົວ ຂອງປະຊາຊົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄລຍະ. ໃນເວລາທີ່ລັດຖະບານ ແລະບໍລິສັດສືບຕໍ່ເປີດເຜີຍຂໍ້ມູນ ທີ່ກ່ຽວຂ້ອງຂອງໂຄງການ ໃຫ້ພາກສ່ວນທີ່ກ່ຽວຂ້ອງນັ້ນ ມັນມີຄວາມຈຳເປັນຕ້ອງ ສ້າງວິທີການໃນການໂຄສະນາເຜີຍແຜ່ຂໍ້ມູນ ດ້ວຍວິທີການອື່ນໆ ເຊັ່ນສູນຂໍ້ມູນຂ່າວສານ ຢູ່ນະຄອນຫລວງວຽງຈັນ ແລະທ່າແຂກ. ລັດຖະບານຍັງສະແດງໃຫ້ເຫັນເຖິງ ຄວາມສົນໃຈຂອງຕົນ ກ່ຽວກັບການຝຶກອົບຮົມ ເຕັກນິກການສື່ສານ ຫລືການພັດທະນາທັກສະ ໃຫ້ແກ່ພະນັກງານຂອງຕົນ ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານ ໃຫ້ມີຄວາມໂປ່ງໃສ ແລະກຳລັງຊອກຫາການຊ່ວຍເຫລືອ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້. ອົງການເພື່ອການພັດທະນາສາກົນ ຂອງປະເທດຝຣັ່ງ ກຳລັງທົບທວນເງື່ອນໄຂ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້.

37. **ກອງປະຊຸມປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ ຄັ້ງທຳອິດໄດ້ຈັດຂຶ້ນໃນວັນທີ 17 ເດືອນພຶດສະພາ 2006.** ມີຜູ້ເຂົ້າຮ່ວມຫລາຍກວ່າ 200 ຄົນ, ກອງປະຊຸມໄດ້ຈັດຂຶ້ນທີ່ເມືອງ ທ່າແຂກ (ເປັນກອງ

ປະຊຸມໜຶ່ງວັນ ຊຶ່ງເປີດກວ້າງ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ໃນການປຶກສາຫາລື ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານ ມາຮອດປັດຈຸບັນ ແລະສິ່ງທ້າທາຍໃນອະນາຄົດ. ຫລັງຈາກກອງປະຊຸມ ໄດ້ມີການຈັດລົງໄປຢ້ຽມຢາມສະຖານທີ່ໂຄງການ ໃນວັນທີ 18 ພຶດສະພາ ຊຶ່ງມີຜູ້ເຂົ້າຮ່ວມຮ້ອຍກວ່າຄົນ ມາຈາກອົງການຂອງລັດຖະບານ, ອົງການພັດທະນາ, ສື່ສານມວນຊົນ ແລະອົງການຈັດຕັ້ງສັງຄົມ. ກອງປະຊຸມໄດ້ຖືກຈັດຂຶ້ນ ໂດຍການເປັນເຈົ້າພາບຂອງ ລັດຖະບານແຫ່ງ ສປປ ລາວ ໂດຍການປະສານງານກັບ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະອົງການການເງິນສາກົນ. ກອງປະຊຸມປຶກສາຫາລືດັ່ງກ່າວ ໄດ້ໃຫ້ໂອກາດທີ່ດີແກ່ພາກສ່ວນທີ່ກ່ຽວຂ້ອງ ໃນການປຶກສາຫາລື ບັນຫາກ່ຽວກັບການຍົກຍ້າຍຈັດສັນ, ສິ່ງແວດລ້ອມ, ອ່າງໂຕ່ງ, ການຕັດໄມ້ຈາກອ່າງໂຕ່ງ, ການຄຸ້ມຄອງລາຍຮັບ, ຊີວະນາໆພັນ, ສັດປ່າ ແລະ ຄຸນນະພາບນ້ຳ. ຫລັງຈາກການຈັດກອງປະຊຸມ ໄດ້ມີການກຳນົດເວລາ 1 ອາທິດ ໃຫ້ແກ່ຜູ້ທີ່ມີຄວາມສົນໃຈ ໃນການກວດກາຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການ ໄດ້ໄປເບິ່ງການດຳເນີນວຽກງານຂອງໂຄງການ. ລັດຖະບານແຫ່ງ ສປປ ລາວ ແລະບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ສືບຕໍ່ຈັດກອງປະຊຸມປະຈຳປີ ແລະ ໃຫ້ເວລາໜຶ່ງອາທິດ ແກ່ຜູ້ທີ່ມີຄວາມສົນໃຈ ລົງໄປຢ້ຽມຢາມສະຖານທີ່ໂຄງການ.

38. **ການຈັດກອງປະຊຸມໂຕະມົນ ສະແດງໃຫ້ເຫັນຄວາມຕັດສິນໃຈສູງ ຂອງລັດຖະບານ.** ລັດຖະບານແຫ່ງ ສປປ ລາວ ໄດ້ດຳເນີນວຽກງານຮ່ວມກັບ ຜູ້ໃຫ້ທຶນທີ່ສຳຄັນ, ລວມທັງທະນາຄານໂລກ ເພື່ອກະກຽມແຜນດຳເນີນງານ ກ່ຽວກັບຖະແຫລງການກຸງປາຣີ. ສ ປປ ລາວ ໄດ້ມີຖະແຫລງການຮ່ວມ ກ່ຽວກັບການນຳໃຊ້ການຊ່ວຍເຫລືອ ທີ່ມີປະສິດທິຜົນ ຊຶ່ງຈະໄດ້ສະເໜີຢູ່ໃນກອງປະຊຸມໂຕະມົນຄັ້ງຕໍ່ໄປ ຊຶ່ງຈະຈັດຂຶ້ນໃນວັນທີ 28-29 ເດືອນ ພະຈິກ 2006, ການບໍລິຫານຈັດການ ແລະການພັດທະນາພາກເອກະຊົນ ຈະເປັນຫົວຂໍ້ສຳຄັນ ຂອງກອງປະຊຸມໂຕະມົນດັ່ງກ່າວ. ແຜນງານພັດທະນາເສດຖະກິດສັງຄົມ ສະໄໝທີ VI ຂອງຊາດຈະໄດ້ຖືກນຳສະເໜີຢູ່ທີ່ກອງປະຊຸມ. ການຈັດກອງປະຊຸມໂຕະມົນ ແຕ່ລະໄລຍະ ໄດ້ໃຫ້ໂອກາດຢ່າງເປັນທາງການ ແກ່ທະນາຄານໂລກ ແລະທະນາຄານພັດທະນາອາຊີ ໄດ້ອະທິບາຍຫຍໍ້ໃຫ້ແກ່ຜູ້ເຂົ້າຮ່ວມ ກອງປະຊຸມກ່ຽວກັບ ຄວາມຄືບໜ້າຂອງໂຄງການ ໄຟຟ້ານ້ຳຕົກນ້ຳເທີນ 2.

## V. ການລາຍງານ ແລະ ການຕິດຕາມກວດກາ

39. **ການລາຍງານ ແລະການເປີດເຜີຍຂໍ້ມູນ.** ໄດ້ມີການລາຍງານແຕ່ລະໄລຍະ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ ໃນແຕ່ລະດ້ານໃຫ້ແກ່ປະຊາຊົນ ໂດຍຜ່ານເວັບໄຊ້ຂອງ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຫລືຂອງລັດຖະບານ. ນອກຈາກນັ້ນເວັບໄຊ້ຂອງທະນາຄານໂລກ ຍັງໃຫ້ຂໍ້ມູນກ່ຽວກັບ ທີມງານທີ່ປຶກສາ ສາກົນ ຊຶ່ງຈະມີເວັບໄຊ້ຂອງຕົນເອງໃນມໍ່ໆນີ້. ບົດລາຍງານຕ່າງໆລວມເອົາ: (i) ບົດລາຍງານ

ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານ ໃນໄລຍະເຄິ່ງປີຂອງໂຄງການນ້ຳເທີນ 2 ຊຶ່ງອອກໂດຍ ບໍລິສັດ ໄຟຟ້ານ້ຳຕົກນ້ຳເທີນ 2; (ii) ບົດລາຍງານການຈັດຕັ້ງປະຕິບັດວຽກງານ ໃນໄລຍະເຄິ່ງປີຂອງ ລັດຖະບານ ກ່ຽວກັບການຄຸ້ມຄອງອ່າງໂຕ່ງ ແລະການຄຸ້ມຄອງການເກັບລາຍຮັບ; (iii) ບົດລາຍງານຂອງ ຄະນະຊ່ຽວຊານເອກະລາດ ຄືຄະນະທີ່ປຶກສາ ແລະທີມງານທີ່ປຶກສາ ສາກົນ ຫລັງຈາກການລົງໄປຢັ້ງມຢາມ ໂຄງການແຕ່ລະຄັ້ງຂອງພວກເຂົາເຈົ້າ; (iv) ບົດລາຍງານຂອງອົງການກວດກາເອກະລາດ. ແລະເອກະສານ ອື່ນໆກ່ຽວກັບ ແຜນງານແລະການຈັດຕັ້ງປະຕິບັດວຽກງານ ຊຶ່ງຈະໄດ້ຮັບການເປີດເຜີຍ ຫລັງຈາກສ້າງສຳ ເລັດ ລວມທັງແຜນຈັດຕັ້ງປະຕິບັດໂຄງການ,[6] ຊຶ່ງບັນຈຸຂໍ້ມູນກ່ຽວກັບ ແຜນງານຈັດຕັ້ງປະຕິບັດວຽກງານ ຢູ່ ກ້ອງເຂືອນ.

40. **ຍັງມີຄວາມສົນໃຈຂອງປະຊາຊົນ ກ່ຽວກັບການເປີດເຜີຍຂໍ້ມູນ ໃນເອກະສານດ້ານເຕັກນິກ.** ຄວາມ ສົນໃຈດັ່ງກ່າວນີ້ ລວມເອົາການເປີດເຜີຍ ແຜນຕັດໄມ້ຈາກອ່າງເກັບນ້ຳ, ແຜນຄຸ້ມຄອງປ່າໄມ້ຊຸມຊົນ, ແຜນ ຍົກຍ້າຍຈັດສັນໝູ່ບ້ານ. ແຜນຕັດໄມ້ຈາກອ່າງເກັບນ້ຳ ກຳລັງສັງລວມເປັນຂັ້ນສຸດທ້າຍ ເພື່ອບັນຈຸເອົາເນື້ອ ໃນ ຂອງບັນດາເອກະສານ ທີ່ສ້າງຂຶ້ນໃນໄລຍະຜ່ານມາ. ທະນາຄານໂລກ ແລະທະນາຄານພັດທະນາອາຊີ ສືບຕໍ່ຮຽກຮ້ອງໃຫ້ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະລັດຖະບານແຫ່ງ ສປປ ລາວ ໃນການເປີດເຜີຍລາຍ ລະອຽດ ຂອງວຽກງານໃນແຜນການຍົກຍ້າຍຈັດສັນ, ແຕ່ບັນຫາທີ່ມີຄວາມເປັນຫ່ວງເປັນໄຍ ອັນໜຶ່ງແມ່ນ ການເປີດເຜີຍເອກະສານ ທີ່ບັນຈຸຂໍ້ມູນໃນລະດັບຄອບຄົວ. ໄດ້ມີການສ້າງບົດລາຍງານຕ່າງໆ ຊຶ່ງເຮັດ ຂຶ້ນສຳລັບການນຳໃຊ້ ຢູ່ພາຍໃນອົງການຂອງຜູ້ໃຫ້ທຶນ ແລະອົງການຈັດຕັ້ງປະຕິບັດ ແລະຕິດຕາມກວດກາ ວຽກງານ, ໃນນັ້ນລວມເອົາອົງການດັ່ງຕໍ່ໄປນີ້: (i) ນັກວິສະວະກອນຂອງຜູ້ໃຫ້ທຶນ ຊຶ່ງໄດ້ສະໜອງບົດລາຍ ງານ ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄຕມາດ (ຊຶ່ງລວມເອົາ ການຈັດຕັ້ງປະຕິບັດ ວຽກງານ ໃນແຕ່ລະດ້ານຂອງໂຄງການ) ນັບແຕ່ເດືອນກໍລະກົດ 2005 ຫລັງຈາກການລົງຢັ້ງມຢາມ ໂຄງ ການໃນແຕ່ລະຄັ້ງ; (ii) ນັກວິສະວະກອນຂອງລັດຖະບານແຫ່ງ ສປປ ລາວ ຊຶ່ງໄດ້ເຮັດບົດລາຍງານຄວາມ ຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານ ຫລັງຈາກມີການຢັ້ງມຢາມ ໂຄງການໃນແຕ່ລະໄຕມາດ ແລະ, (iii) ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຊຶ່ງເຮັດບົດລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ໃນແຕ່ ລະເດືອນ. ບົດລາຍງານປະຈຳເດືອນ ແລະບົດລາຍງານ ທາງດ້ານວິຊາການຈຳນວນໜຶ່ງ ບໍ່ໄດ້ຖືກເປີດເຜີຍ, ຍ້ອນວ່າເປັນເອກະສານລະອຽດ ກ່ຽວກັບການດຳເນີນງານ ຊຶ່ງຂຽນຂຶ້ນເພື່ອຊີ້ນຳ ການຈັດຕັ້ງປະຕິບັດວຽກ ງານ ຂອງພະນັກງານວິຊາການ ແລະຜູ້ບໍລິຫານ ທີ່ເຮັດວຽກຢູ່ໂຄງການ, ແລະຕ້ອງໄດ້ມີການດັດແກ້ ໃນແຕ່ ລະໄລຍະ ໂດຍຂຶ້ນກັບການປ່ຽນແປງສະພາບການ. ນອກຈາກການລາຍງານຢ່າງເປັນທາງການແລ້ວ, ຍັງມີ ການແລກປ່ຽນຂໍ້ມູນເພີ່ມເຕີມ ໃນແຕ່ລະໄລຍະ ໂດຍການຕອບຄຳຖາມ. ຕົວຢ່າງມີການສົ່ງຄຳຖາມ ໃຫ້ແກ່

---

[6] ແຜນຈັດຕັ້ງປະຕິບັດໂຄງການສະບັບທຳອິດ ແມ່ນໄດ້ຖືກເປີດເຜີຍ ແລະສາມາດສະໜອງໄດ້ ຢູ່ເວັບໄຊ້ຂອງ ບໍລິສັດໄຟຟ້າ ນ້ຳຕົກນ້ຳເທີນ 2.

ບໍລິສັດໄຟຟ້ານ້ຳເທີນ 2 ແລະທະນາຄານໂລກ ແລະທະນາຄານພັດທະນາອາຊີ ຈາກອົງການຈັດຕັ້ງສາກົນ ເພື່ອຊອກຫາຂໍ້ມູນລະອຽດກ່ຽວກັບ ການຈັດຕັ້ງປະຕິບັດໂຄງການ, ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບການຕອບຄຳຖາມ ຕາມຄວາມເໝາະສົມ.

**41. ມີຄວາມຈຳເປັນຕ້ອງ ເພີ້ມທະວີການຕິດຕາມກວດກາ ບໍລິສັດທົວໜ້າຝ່າຍກໍ່ສ້າງ**. ຄະນະຜູ້ຊ່ຽວຊານ ແລະວິສະວະກອນຂອງຜູ້ໃຫ້ທຶນ ເຫັນວ່າການກວດກາ ຜົນກະທົບຂອງການກໍ່ສ້າງ ຂອງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະລັດຖະບານແຫ່ງ ສປປ ລາວນັ້ນ ແມ່ນຍັງບໍ່ທັນເຮັດໄດ້ດີ. ຕ້ອງມີຄວາມເອົາໃຈໃສ່ຫລາຍຂຶ້ນ ຕໍ່ຜົນກະທົບ ແລະມີຄວາມຈຳເປັນຕ້ອງໄດ້ນຳໃຊ້ ມາດຕະການຫລຸດຜ່ອນຜົນກະທົບ ທີ່ເຫັນວ່າມີຄວາມຈຳເປັນ, ໂດຍສະເພາະກ່ຽວກັບ ບັນຫາທາງດ້ານສິ່ງແວດລ້ອມ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະບໍລິສັດທົວໜ້າຝ່າຍກໍ່ສ້າງ ໄດ້ຕົກລົງສ້າງກົນໄກ ຕິດຕາມກວດກາຜົນກະທົບ ເພື່ອແກ້ໄຂບັນຫາດັ່ງກ່າວນີ້. ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ຂອງລັດຖະບານແຫ່ງ ສປປ ລາວ ຍັງບໍ່ທັນມີຄວາມສາມາດ ເພື່ອດຳເນີນໜ້າທີ່ຕິດຕາມກວດກາ, ແຕ່ມີໂຄງການໃຫ້ການຊ່ວຍເຫລືອ ທາງດ້ານວິຊາການ ເພື່ອແກ້ໄຂບັນຫາດັ່ງກ່າວນີ້.

**42. ການຈັດການເພື່ອກວດກາໂຄງການແບບຮອບດ້ານ ໄດ້ຖືກຈັດຕັ້ງປະຕິບັດ.** ການຈັດການດັ່ງກ່າວນີ້ລວມເອົາ ທີມງານທີ່ປຶກສາສາກົນ, ທີມງານທີ່ປຶກສາ, ນັກວິສະວະກອນ ຂອງຜູ້ໃຫ້ທຶນ, ທີມງານກວດກາຄວາມປອດໄພຂອງເຂື່ອນ, ນັກວິສະວະກອນຂອງລັດຖະບານແຫ່ງ ສປປ ລາວ ແລະອົງການຕິດຕາມກວດກາວຽກງານ ທີ່ມີຄວາມເປັນເອກະລາດ ແລະທີມງານຄຸ້ມຄອງກວດກາວຽກງານ ຂອງສະຖາບັນການເງິນສາກົນ ຊຶ່ງໄດ້ມີການອະທິບາຍ ລາຍລະອຽດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນ ໃນບົດລາຍງານປະຈຳປີ ໃຫ້ແກ່ສະພາບໍລິຫານ (ໃນວັນທີ 28 ມີນາ 2006). ໄດ້ມີການດັດແກ້ຮູບແບບ ການຈັດຕັ້ງໂດຍອີງໃສ່ບົດຮຽນ ແລະປະສົບການ ຈາກການຈັດຕັ້ງປະຕິບັດ ໂຄງການໃນໄລຍະໜຶ່ງປີຜ່ານມາ ແລະຄຳປຶກສາທີ່ໄດ້ຮັບ ຈາກທີມງານທີ່ປຶກສາສາກົນ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະລັດຖະບານແຫ່ງ ສປປ ລາວ ໄດ້ແກ້ໄຂບັນຫາ ແລະຂໍ້ສະເໜີແນະນຳ ແບບມີລັກສະນະສ້າງສັນ. ໄດ້ມີການຊອກຫາວິທີການ ເພື່ອເຮັດໃຫ້ການກວດກາ ໂຄງການຂອງສະຖາບັນການເງິນສາກົນ ແລະນັກວິສະວະກອນຂອງຜູ້ໃຫ້ທຶນ ມີຄວາມສອດຄ່ອງກັນ.

**43. ທີມງານທີ່ປຶກສາສາກົນ ໄດ້ຮັບການປັບປຸງ ໂດຍມີສະມາຊິກໃໝ່ ເພີ້ມອີກສາມຄົນ**. ທີມງານທີ່ປຶກສາສາກົນ ທີ່ມີຄວາມເປັນເອກະລາດນັ້ນ ປັດຈຸບັນແມ່ນມີສະມາຊິກ ຫ້າຄົນ. ຜູ້ໜຶ່ງແມ່ນໄປປ່ຽນແທນສະມາຊິກຂອງທີມງານຜູ້ເກົ່າ ທີ່ໄດ້ໄປຮ່ວມເປັນສະມາຊິກ ຂອງທີມງານຜູ້ຊ່ຽວຊານ ຂອງອົງການນ້ຳເທີນ 2 ແລະຜູ້ອື່ນຈະຮັບໜ້າທີ່ຕຳແໜ່ງ ກ່ຽວກັບການຄຸ້ມຄອງລາຍຮັບ ແລະການພັດທະນາຊຸມຊົນ/ການມີສ່ວນ

ຮ່ວມຂອງປະຊາຊົນ. ສະມາຊິກໃໝ່ທີ່ຖືກແຕ່ງຕັ້ງ ໂດຍປະທານທະນາຄານໂລກມີຄື: (i) ທ່ານ ແຈັກ ເຈຣິນ, (ii) ທ່ານ ຣອບ ເຣັດດິ້ງ ແລະ (iii) ທ່ານນາງ ແມຣີ່ ຣາດຊະລິດ. ພວກເຂົາເຈົ້າຈະເຂົ້າຮ່ວມວຽກງານ ກັບທ່ານ ດິກ (Dick de Zeeuw) ຈຶ່ງຈະສືບຕໍ່ປະຕິບັດໜ້າທີ່ ເປັນຫົວໜ້າທີມງານ, ແລະທ່ານ ເອມິວ ຊາລີນ. ສະມາຊິກທັງຫ້າຄົນຂອງ ທີມງານທີ່ປຶກສາສາກົນ ມີຄວາມຮູ້ຢ່າງກວ້າງຂວາງ ກ່ຽວກັບບັນດາປະເທດພັດທະນາ ແລະມີປະສົບການກ່ຽວກັບ ໂຄງການລົງທຶນຂະໜາດໃຫຍ່ ແລະການດຳເນີນວຽກງານ ຂອງອົງການຈັດຕັ້ງສາກົນ. ຢູ່ໃນໄລຍະຈັດຕັ້ງປະຕິບັດໂຄງການ, ໜ້າທີ່ຮັບຜິດຊອບສະເພາະຂອງທີມງານທີ່ປຶກສາສາກົນ ລວມເອົາ: (i) ການກຳນົດບັນຫາທີ່ຈະເກີດຂຶ້ນ, ຖ້າເກີດຂຶ້ນບັນຫາດັ່ງກ່າວ ແມ່ນກ່ຽວກັບ: ການຄຸ້ມຄອງຜົນກະທົບ ທາງດ້ານສິ່ງແວດລ້ອມ ແລະສັງຄົມຂອງໂຄງການ, ການເຂົ້າຮ່ວມຂອງອົງການຈັດຕັ້ງສັງຄົມ ໃນການຈັດຕັ້ງປະຕິບັດໂຄງການ, ຄວາມຄືບໜ້າກ່ຽວກັບ ການສ້າງຄວາມສາມາດ ຢູ່ໃນອົງການທີ່ກ່ຽວຂ້ອງຂອງລັດຖະບານ, ການຄຸ້ມຄອງລາຍຮັບ ທີ່ໄດ້ຈາກການຂາຍໄຟຟ້າ ທີ່ຜະລິດຈາກໂຄງການ ແລະບັນຫາອື່ນໆ ກ່ຽວກັບການຄຸ້ມຄອງບໍລິຫານ; (ii) ໃຫ້ຄຳສະເໜີແນະນຳ ແກ່ທະນາຄານໂລກ ກ່ຽວກັບວິທີການ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ທີ່ມີປະສິດທິຜົນ ຊຶ່ງຈຳເປັນຕ້ອງໄດ້ນຳໄປຈັດຕັ້ງປະຕິບັດ ຫລືປຶກສາຫາລືກັບລັດຖະບານແຫ່ງ ສປປ ລາວ ແລະບໍລິສັດໄຟຟ້ານ້ຳເທີນ 2 ເພື່ອແກ້ໄຂບັນຫາ ທີ່ໄດ້ພົບເຫັນ. ທີມງານທີ່ປຶກສາສາກົນ ຈະສຸມໃສ່ບັນຫາກ່ຽວກັບ ການພັດທະນາຄວາມສາມາດ ການປັບປຸງການຈັດຕັ້ງ ຍ້ອນວ່າມັນມີຄວາມສຳຄັນຕໍ່ ຄວາມສຳເລັດໃນການຈັດຕັ້ງປະຕິບັດໂຄງການ. ທີມງານທີ່ປຶກສາ ຍັງຈະໄດ້ກວດກາ ຂອບເຂດ ແລະຄຸນນະພາບ ຂອງການຕິດຕາມກວດກາວຽກງານ ຂອງທະນາຄານໂລກ ຕໍ່ໂຄງການ. ທີມງານທີ່ປຶກສາສາກົນ ໄດ້ໄປຢ້ຽມຢາມໂຄງການສອງຄັ້ງ ຫລັງຈາກການເລີ້ມຈັດຕັ້ງປະຕິບັດໂຄງການ, ຄັ້ງທີໜຶ່ງ ແມ່ນຢູ່ໃນເດືອນສິງຫາ 2005 ຊຶ່ງສະມາຊິກຜູ້ໜຶ່ງ ຂອງທີມງານທີ່ປຶກສາ ໄດ້ເຂົ້າຮ່ວມວຽກງານຂອງທີມງານ ຜູ້ຊ່ຽວຊານ ແລະໄດ້ມີການລົງໄປຢ້ຽມຢາມ ໂຄງການໃນຄັ້ງທີສອງ ໄລຍະເດືອນມັງກອນ/ກຸມພາ 2006. ທີມງານທີ່ປຶກສາສາກົນ ຈະໄປຢ້ຽມຢາມໂຄງການອີກ ໃນເດືອນກຸມພາ 2007.

44. **ທີມງານຜູ້ຊ່ຽວຊານ ໄດ້ໄປຢ້ຽມຢາມສະຖານທີ່ໂຄງການ ໃນເດືອນສິງຫາ 2006.** ການລົງໄປຢ້ຽມຢາມໂຄງການ ຄັ້ງທີສອງໃນປີນີ້ ແມ່ນເພື່ອຕິດຕາມ ການປະຕິບັດຂໍ້ສະເໜີແນະນຳ ໃນໄລຍະເດືອນມັງກອນ/ກຸມພາ 2006 ໂດຍສະເພາະບັນຫາກ່ຽວກັບ ການຍົກຍ້າຍຈັດສັນ. ບົດລາຍສະບັບທີ 10 ຂອງຄະນະຊ່ຽວຊານ ຄາດວ່າຈະຖືກສ້າງສຳເລັດ ແລະພິມເຜີຍແຜ່ ຢູ່ໃນໄລຍະອັນມໍ່ໆນີ້. ວຽກງານທີ່ຈະໄດ້ຈັດຕັ້ງປະຕິບັດ ຕາມຂໍ້ສະເໜີແນະນຳນັ້ນ ຈະໄດ້ລະບຸຢູ່ໃນບົດລາຍງານ ປະຈຳປີ ຂອງໂຄງການນ້ຳເທີນ 2 ໃຫ້ແກ່ສະພາບໍລິຫານ ຂອງທະນາຄານ ໂລກ ແລະທະນາຄານພັດທະນາອາຊີ. ໂດຍອີງຕາມການອະທິບາຍທາງປາກເປົ່າໂດຍຫຍໍ້ ໃນຕອນທ້າຍຂອງການໄປຢ້ຽມຢາມແຕ່ລະຄັ້ງ ແມ່ນຈະມີການຮ່າງບົດລາຍງານຂອງທີມງານທີ່ຊ່ຽວຊານ ໃຫ້ແກ່ທະນາຄານໂລກ ແລະທະນາຄານພັດທະນາອາຊີ. ບັນຫາທີ່ທີມງານຜູ້

ຊ່ຽວຊານ ຍົກຂຶ້ນນັ້ນ ແມ່ນກ່ຽວກັບການປັບປຸງ ການຄຸ້ມຄອງຜົນກະທົບ ທາງດ້ານສິ່ງແວດລ້ອມ ຢູ່ເຂດກໍ່ສ້າງໂຄງການ ການຮັບປະກັນໃຫ້ວຽກງານ ການປັບປຸງຊີວິດການເປັນຢູ່ ບໍ່ມີຄວາມຊັກຊ້າ ກວ່າການຍົກຍ້າຍຈັດສັນ ຊຶ່ງໄດ້ດໍາເນີນໄປແລ້ວ ແລະສືບຕໍ່ແກ້ໄຂບັນຫາທີ່ຈະເກີດຂຶ້ນ ຢູ່ເຂດກ້ອງເຂື່ອນ ໃຫ້ທັນກັບເວລາ. ທີມງານຜູ້ຊ່ຽວຊານ ຍັງຊີ້ໃຫ້ເຫັນເຖິງ ຄວາມຕ້ອງການ ໃນການຕັດສິນບັນຫາ ໃຫ້ທັນກັບເວລາ ກ່ຽວກັບການຂຸດຄົ້ນໄມ້ ຈາກອ່າງເກັບນ້ຳ ແລະການອະນາໄມສານຊີວະພາບ ແລະຄວາມສຳຄັນ ໃນການຮັບປະກັນໃຫ້ ໂຄງການມີຜົນກະທົບ ຕໍ່ເສດຖະກິດມະຫາພາກ ຊຶ່ງຈະຖືກຕິດຕາມກວດກາຢ່າງໃກ້ຊິດ ໂດຍລັດຖະບານແຫ່ງ ສປປ ລາວ ດ້ວຍການສະໜັບສະໜູນ ຂອງທະນາຄານໂລກ. ທີມງານທີ່ປຶກສາ ຍັງຊີ້ໃຫ້ເຫັນບາງຂົງເຂດວຽກງານ ທາງດ້ານການຈັດຕັ້ງ ຊຶ່ງຕ້ອງໄດ້ຮັບຄວາມເອົາໃຈໃສ່ ໂດຍລັດຖະບານແຫ່ງ ສປປ ລາວ ແລະບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ລວມທັງ: (i) ການສ້າງຕັ້ງອົງການປະສານງານຂອງລັດຖະບານ, ໂດຍສະເພາະຫລັງຈາກມີການ ປັບປຸງລັດຖະບານຜ່ານມາມໍ່ໆນີ້; (ii) ເຮັດໃຫ້ການຄຸ້ມຄອງວຽກງານຂອງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຕໍ່ບໍລິສັດຫົວໜ້າການຮັບເໝົາກໍ່ສ້າງ ແລະບໍລິສັດຮັບເໝົາຕໍ່ຊ່ວງເພື່ອຮັບປະກັນວ່າ ໄດ້ມີການຈັດຕັ້ງປະຕິບັດ ມາດຕະການຫລຸດຜ່ອນ ຜົນກະທົບທາງດ້ານສິ່ງແວດລ້ອມ ທີ່ເກີດຂຶ້ນຈາກການກໍ່ສ້າງຢ່າງເໝາະສົມ; (iii) ພັດທະນາຄວາມສາມາດຂອງການຈັດຕັ້ງ ເພື່ອປັບປຸງການປະສານງານໃຫ້ດີຂຶ້ນ ກ່ຽວກັບການຄຸ້ມຄອງທີ່ດິນ ເຂດອ່າງເກັບນ້ຳ, ເຂດກ້ອງເຂື່ອນ ແລະທີ່ດິນຂອງໂຄງການ; (iv) ສືບຕໍ່ປັບປຸງລະບົບການຕິດຕາມກວດກາ ສິ່ງແວດລ້ອມຂອງ ສປປ ລາວ, ແລະອົງການຕິດຕາມກວດກາວຽກງານ ທີ່ມີຄວາມເປັນເອກະລາດຂອງລັດຖະບານ ຈະຖືກສ້າງຕັ້ງຂຶ້ນ ແລະດຳເນີນວຽກງານ ໂດຍຖືວ່າເປັນວຽກງານ ທີ່ມີບູລິມະສິດສູງ.

**45. ມີຄວາມຊັກຊ້າໃນການວ່າຈ້າງສອງໃນສາມ ຂອງທີມງານຕິດຕາມກວດກາວຽກງານ ທີ່ເປັນເອກະລາດ.** ນອກຈາກອົງການຕິດຕາມກວດກາວຽກງານ ສາມປະເທດແລ້ວເຊັ່ນ: ທີມງານຜູ້ຊ່ຽວຊານ, ທີມງານທີ່ປຶກສາສາກົນ ແລະນັກວິສະວະກອນຂອງຜູ້ໃຫ້ທຶນ, ສັນຍາສຳປະທານ ແລະການໃຫ້ການຊ່ວຍເຫລືອ ເພື່ອພັດທະນາສາກົນ ສຳລັບໂຄງການສິ່ງແວດລ້ອມ ແລະສັງຄົມ ໃນສາຍນ້ຳເທີນ 2 (ໂຄງການສິ່ງແວດລ້ອມ ແລະສັງຄົມຂອງນ້ຳເທີນ 2, ເບິ່ງວັກ 47 ຢູ່ຂ້າງລຸ່ມນີ້). ແລ້ວຍັງເຫັນວ່າມີຄວາມຈຳເປັນ ຕ້ອງໄດ້ມີການສ້າງຕັ້ງ ອົງການກວດກາເອກະລາດ ອີກສາມອົງການ (ສຳລັບ ການຄຸ້ມຄອງ ແລະປົກປັກຮັກສາອ່າງໂຕ່ງ, ໜ່ວຍງານຄຸ້ມຄອງ ການຍົກຍ້າຍຈັດສັນ ແລະໜ່ວຍງານຄຸ້ມຄອງສິ່ງແວດລ້ອມ,[7]ຕາມລຳດັບ) ໃນສາມອົງການຄື: ອົງການຕິດຕາມກວດກາວຽກງານເອກະລາດ ສຳລັບອົງການຄຸ້ມຄອງ ແລະປົກປັກຮັກສາອ່າງໂຕ່ງ

[7] ອົງການຕິດຕາມກວດກາວຽກງານເອກະລາດ ສຳລັບໜ່ວຍງານຄຸ້ມຄອງການຍົກຍ້າຍຈັດສັນ ຈະດຳເນີນງານຢູ່ໃນສອງລະບົບ: ວິທີການທີ່ໜຶ່ງ ແມ່ນການຄຸ້ມຄອງການຍົກຍ້າຍຈັດສັນ ຢູ່ເຂດພູພຽງ ແລະວິທີການອື່ນນັ້ນ ແມ່ນການຄຸ້ມຄອງບັນຫາຢູ່ເຂດກ້ອງເຂື່ອນ ແລະທີ່ດິນໂຄງການ. ກ່ຽວກັບອົງການຕິດຕາມກວດກາ ວຽກງານທີ່ມີຄວາມເອກະລາດ ສຳລັບໜ່ວຍງານຄຸ້ມຄອງສິ່ງແວດລ້ອມນັ້ນ ເຫັນວ່າມີຄວາມຈຳເປັນ ໃນການແກ້ໄຂການດຳເນີນວຽກງານ ທີ່ມີລັກສະນະຊ້ຳຊ້ອນກັນ ລະຫວ່າງອົງການກວດກາເອກະລາດ ແລະໜ່ວຍງານຄຸ້ມຄອງສິ່ງແວດລ້ອມ, ບັນຫາດັ່ງກ່າວນີ້ ກຳລັງໄດ້ຮັບການແກ້ໄຂໃນປັດຈຸບັນ.

ແມ່ນໄດ້ຮັບການແຕ່ງຕັ້ງຂຶ້ນ ແລະໄດ້ດຳເນີນການຕີລາຄາວຽກງານຄັ້ງທຳອິດ ໃນເດືອນພຶດສະພາ 2006. ອົງການຕິດຕາມກວດກາວຽກງານ ທີ່ມີຄວາມເປັນເອກະລາດ ອີກສອງອົງການນັ້ນ ບໍ່ທັນໄດ້ຖືກສ້າງຕັ້ງຂຶ້ນ. ຄະນະບໍລິຫານຂອງທະນາຄານໂລກ ໄດ້ສົ່ງຈົດໝາຍ (ຊຶ່ງໄດ້ຮັບການສະໜັບສະໜູນ ຢ່າງເຕັມສ່ວນຈາກທະນາຄານພັດທະນາອາຊີ, ໄປໃຫ້ລັດຖະບານແຫ່ງ ສປປ ລາວ/ບໍລິສັດໄຟຟ້ານ້ຳເທີນ 2 ເອົາໃຈໃສ່ຕໍ່ບັນຫາທີ່ເກີດຂຶ້ນ. ໃນເວລາດຽວກັນນັກວິສະວະກອນ ຂອງອົງການຜູ້ໃຫ້ທຶນ (ຊຶ່ງມີການລາຍງານປະຈຳໄຕມາດ ໃຫ້ແກ່ຜູ້ໃຫ້ທຶນ), ນັກວິສະວະກອນຂອງລັດຖະບານແຫ່ງ ສປປ ລາວ (ໄດ້ມີການລາຍງານ ແຕ່ລະໄຕມາດໃຫ້ແກ່ ລັດຖະບານແຫ່ງ ສປປ ລາວ) ແລະທີມງານຜູ້ຊ່ຽວຊານ (ມີການເຮັດບົດລາຍງານໄລຍະເຄິ່ງປີໃຫ້ແກ່ລັດຖະບານແຫ່ງ ສປປ ລາວ) ໄດ້ຕິດຕາມກວດກາຜົນກະທົບ ທາງດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ຕິດພັນກັບການກໍ່ສ້າງໂຄງການ, ການຊັກຊ້າໃນການແຕ່ງຕັ້ງ ອົງການກວດກາເອກະລາດ ອີກສອງອົງການນັ້ນ ຈະເກີດຜົນກະທົບທາງລົບ ຕໍ່ຄຸນນະພາບຂອງການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານ. ລັດຖະບານແຫ່ງ ສປປ ລາວ ໄດ້ເລີ້ມຄັດເລືອກຂັ້ນຕອນ ໂດຍການນຳໃຊ້ບົດນຳຂອງທະນາຄານໂລກແລະຜູ້ຊ່ຽວຊານຈະຖືກວ່າຈ້າງ ເຂົ້າມາເຮັດວຽກໃນເດືອນທັນວາ 2006 ແລະເດືອນກຸມພາ 2007 ເພື່ອປະຕິບັດໜ້າທີ່ເປັນອົງການກວດກາ ທີ່ເປັນເອກະລາດ ຕໍ່ວຽກງານທາງດ້ານສັງຄົມ ແລະສິ່ງແວດລ້ອມ, ຕາມລຳດັບ.

46. **ການຈັດຕັ້ງລະດັບບໍລິຫານ ແລະ ການຕິດຕາມກວດກາວຽກງານ ຂອງທະນາຄານພັດທະນາອາຊີ ແມ່ນມີປະສິດທິຜົນ.** ທີມງານຈັດຕັ້ງປະຕິບັດໂຄງການ ຂອງທະນາຄານພັດທະນາອາຊີ ລວມມີພະນັກງານຈາກພະແນກອາຊີໃຕ້, ພະແນກພັດທະນາພາກເອກະຊົນ ແລະພະແນກອື່ນໆ ຊຶ່ງລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ຫົວໜ້າກົມກໍ່ສ້າງໂຄງລ່າງພື້ນຖານ ຢູ່ອາຊີຕາເວັນອອກສຽງໃຕ້ ຊຶ່ງເຮັດວຽກໂດຍມີການປຶກສາຫາລືກັບ ຜູ້ຕ່າງໜ້າຂອງຕົນ ຢູ່ນະຄອນຫລວງວຽງຈັນ. ມີຜູ້ຊ່ຽວຊານລະດັບອະວຸໂສ 2 ທ່ານ, ຜູ້ໜຶ່ງຮັບຜິດຊອບວຽກງານການກໍ່ສ້າງ ແລະການຄຸ້ມຄອງໂຄງການ, ແລະອີກຜູ້ໜຶ່ງຮັບຜິດຊອບກ່ຽວກັບ ວຽກງານການປ້ອງກັນຜົນກະທົບຕໍ່ສັງຄົມ ຊຶ່ງໄດ້ຖືກຍົກຍ້າຍໃຫ້ມາປະຈຳຢູ່ ນະຄອນຫລວງວຽງຈັນແລະບາງກອກ ຕາມລຳດັບ ເພື່ອເພີ້ມທະວີວຽກງານ ຕິດຕາມກວດກາໂຄງການ ຂອງທະນາຄານພັດທະນາອາຊີ. ທີມງານໄດ້ມີການລາຍງານ ຢ່າງເປັນປະຈຳໃຫ້ແກ່ ລະດັບບໍລິຫານຂັ້ນສູງ ແລະສະພາບໍລິຫານຂອງທະນາຄານພັດທະນາອາຊີ. ການສະໜອງເງິນກູ້ ຂອງທະນາຄານພັດທະນາອາຊີ ໃຫ້ແກ່ພາກລັດ ທີ່ມີມູນຄ່າ 20 ລ້ານໂດລາ ໄດ້ຖືກໂອນຕາມກຳນົດເວລາ. ໃນທ້າຍເດືອນກັນຍາ 2006, ເງິນກູ້ຈຳນວນ 21.23 ລ້ານ ໂດລາສະຫະລັດອາເມລິກາ (ຊຶ່ງແມ່ນ 42% ຂອງເງິນກູ້ທັງໝົດ ໃນຈຳນວນ 50 ລ້ານ) ຂອງທະນາຄານພັດທະນາອາຊີ ສຳລັບພາກເອກະຊົນ ທີ່ຈະສະໜອງໃຫ້ແກ່ ບໍລິສັດໄຟຟ້ານ້ຳເທີນ 2 ແມ່ນໄດ້ຖືກໂອນເຊັ່ນກັນ. ໄດ້ມີການລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ໂຄງການໄຟຟ້າ

ນ້ຳຕົກເທີນຫີນບູນ ໂດຍທະນາຄານພັດທະນາອາຊີ ໂດຍບັນຈຸເປັນເອກະສານຊ້ອນທ້າຍທີ 1 ຂອງບົດລາຍງານສະບັບນີ້.

47. **ທະນາຄານໂລກ ໄດ້ປັບປຸງປະສິດທິຜົນ ຂອງການຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານ ແລະການສື່ສານຂອງຕົນ.** ທີມງານຂະໜາດໃຫຍ່ ກ່ຽວກັບໂຄງການນ້ຳເທີນ 2 ຊຶ່ງພົວພັນກັບຫລາຍຂະແໜງການ, ໄດ້ຈັດຕັ້ງປະຕິບັດວຽກງານຢູ່ຫລາຍແຫ່ງ, ໃນປັດຈຸບັນ ແມ່ນດຳເນີນວຽກງານ ພາຍໃຕ້ຜູ້ປະສານງານໂຄງການ-ຜູ້ບໍລິຫານ ໂຄງການໃນລະດັບປະເທດ ທີ່ປະຈຳຢູ່ໃນນະຄອນຫລວງວຽງຈັນ, ຜູ້ຊ່ຽວຊານດ້ານພະລັງງານ ທີ່ປະຈຳຢູ່ກຸງ ວໍຊິງຕັນ. ພວກເຂົາເຈົ້າມີຄວາມຮັບຜິດຊອບຮ່ວມກັນ ຕໍ່ປະສິດທິຜົນ ໃນການກວດກາ ການຈັດຕັ້ງປະຕິບັດ ໂຄງການນ້ຳເທີນ 2. ພວກເຂົາເຈົ້າລາຍງານ ໃຫ້ແກ່ຜູ້ອຳນວຍການ ທີ່ປະຈຳຢູ່ບາງກອກ ແລະສາມາດຂໍຄຳແນະນຳຈາກ ຜູ້ບໍລິຫານ ແລະຜູ້ອຳນວຍການ ຂະແໜງການຕ່າງໆ. ການຈັດຊື້ພາຍໃຕ້ການຊ່ວຍເຫລືອ ຂອງອົງການພັດທະນາສາກົນ ສຳລັບໂຄງການ ຄຸ້ມຄອງຜົນກະທົບທາງດ້ານສິ່ງແວດລ້ອມ ແລະສັງຄົມ ຂອງໂຄງການນ້ຳເທີນ 2 ໄດ້ຖືກລິເລີ້ມຈັດຕັ້ງປະຕິບັດ. ໃນທ້າຍເດືອນກັນຍາ 2006 ຈະມີການໃຫ້ການຊ່ວຍເຫລືອລ້າ ທີ່ມີມູນຄ່າ 20 ລ້ານໂດລາ, ຊຶ່ງ 8.9 ລ້ານໂດລາ ຫລື 45% ຂອງການຊ່ວຍເຫລືອລ້າດັ່ງກ່າວ ແມ່ນໄດ້ຖືກໂອນແລ້ວ. ການຕິດຕາມກວດກາວຽກງານ ໂດຍທະນາຄານໂລກ ແລະທະນາຄານພັດທະນາອາຊີ ແມ່ນມີການປະສານງານກັນດີຂຶ້ນ ແລະມີການຮ່ວມງານໃນການຕິດຕາມກວດກາວຽກງານ ກັບສະຖາບັນການເງິນສາກົນ. ທີມງານຕິດຕາມກວດກາ ການຄຸ້ມຄອງວຽກງານປະຈຳປີ ແລະການຄຸ້ມຄອງວຽກງານ ໃນໄລຍະເຄິ່ງປີ ຂອງສະຖາບັນການເງິນສາກົນ ໄດ້ມີການປະສານງານຢ່າງເຕັມສ່ວນ ກັບບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະລັດຖະບານແຫ່ງ ສປປ ລາວ. ການຕິດຕາມກວດກາວຽກງານ ຄັ້ງຕໍ່ໄປຂອງໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໂດຍສະຖາບັນການເງິນສາກົນນັ້ນ ແມ່ນໄດ້ວາງແຜນໄວ້ ສຳລັບເດືອນພະຈິກ 2006. ການພົວພັນວຽກງານໃນແຕ່ລະວັນ ລະຫວ່າງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2, ລັດຖະບານແຫ່ງ ສປປ ລາວ ແລະທີມງານຂອງສະຖາບັນການເງິນສາກົນ ທີ່ປະຈຳຢູ່ພາຍໃນປະເທດນັ້ນ ແມ່ນມີຄວາມພະຍາຍາມ ເບິ່ງເວລາ ແລະການແກ້ໄຂບັນຫາ ທີ່ເກີດຂຶ້ນເພື່ອຫລີກເວັ້ນ ການເຂົ້າໄປແຊກແຊງ ຫລືລົບກວນວຽກງານການກໍ່ສ້າງຫລາຍເກີນໄປ.

## ເອກະສານຊ້ອນທີ 1 ການລາຍງານຄວາມຄືບໜ້າ ຂອງໂຄງການໄຟຟ້ານ້ຳຕົກເທີນຫີນບູນ ຈາກທະນາຄານພັດທະນາອາຊີ